ບົດລາຍງານດ້ານສິດທິມະນຸດ ໃນ ສປປ ລາວ ປະຈຳປີ 2012

ບົດສະຫຼຸບຫຍໍ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນປະເທດທີ່ມີລະບອບການປົກຄອງແບບລັດກຳອຳນາດທັງໝົດ, ມີການປົກຄອງປະເທດໂດຍພັກການເມືອງດຽວຄື ພັກປະຊາຊົນປະຕິວັດລາວ (ພປປລ) ເຊິ່ງໄດ້ກຳນົດໄວ້ໃນລັດຖະທຳມະນູນ. ການເລືອກຕັ້ງຄັ້ງຫຼ້າສຸດຂອງສະພາແຫ່ງຊາດໄດ້ມີຂຶ້ນໃນ ເດືອນເມສາ 2011 ນັ້ນ ບໍ່ໄດ້ຖືກພິຈາລະນາວ່າ ເປັນການເລືອກຕັ້ງທີ່ເສລີ ແລະ ຍຸດຕິທຳ. ກອງກຳລັງຮັກສາຄວາມສະຫງົບລາຍງານໄປຍັງເຈົ້າໜ້າທີ່ຝ່າຍພົນລະເຮືອນ.

ບັນຫາສິດທິມະນຸດທີ່ໜ້າສັງເກດທີ່ສຸດ ຍັງຄົງມີລັກສະນະສືບຕໍ່ກໍ່ຄື ລັດຖະບານປະຕິເສດພົນລະເມືອງຕໍ່ກັບສິດໃນການປ່ຽນແປງລັດຖະບານຂອງເຂົາເຈົ້າ, ສະພາບຂອງຄຸກຢູ່ບາງບ່ອນຍັງມີຄວາມເປີເປື້ອນບໍ່ເປັນລະບຽບຮຽບຮ້ອຍດີ, ແລະ ການສໍ້ລາດບັງຫຼວງ ຍັງຄົງປະກົດມີໃນຖັນແຖວເຈົ້າໜ້າທີ່ຕຳຫຼວດ ແລະ ຕຸລາການ.

ບັນຫາສິດທິມະນຸດອື່ນໆຍັງຄົງມີຢູ່ຄື: ນັກໂທດ ແລະ ຜູ້ຖືກກັກຕົວ ຖືກທຳຮ້າຍໂດຍເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຮັກສາຄວາມສະຫງົບຈຳນວນໜຶ່ງ; ການຈັບກຸມ ແລະ ກັກຂັງໂດຍພະລະການ; ການລະເມີດສິດເສລີພາບຂອງລັດຖະບານ ຕໍ່ກັບການປາກເວົ້າ, ສື່ມວນຊົນ, ການຊຸມນຸມ ແລະ ສະມາຄົມ ເຊັ່ນດຽວກັບສິດທິສ່ວນຕົວ; ການຈຳກັດຂອງລັດຖະບານຕໍ່ສິດເສລີພາບທາງດ້ານວິຊາການ; ການຈຳກັດຂອງອຳນາດການປົກຄອງທ້ອງຖິ່ນຕໍ່ອິສະຫຼະພາບໃນການນັບຖືສາດສະໜາ, ບັນຫາການຄ້າມະນຸດ; ການຈຳແນກຂອງສັງຄົມໂດຍອີງໃສ່ຄວາມເພິ່ງພໍໃຈຕໍ່ກັບການສະແດງອອກທາງເພດ ແລະ ກີດກັນຕໍ່ຜູ້ທີ່ມີເຊື້ອພະຍາດ HIV/AIDS; ແລະ ການຈຳກັດຂອງລັດຖະບານຕໍ່ກັບສິດທິຂອງຜູ້ອອກແຮງງານ.

ລັດຖະບານບໍ່ໄດ້ດຳເນີນຂັ້ນຕອນໃດໆ ເພື່ອດຳເນີນຄະດີ ແລະ ລົງໂທດ ຕໍ່ເຈົ້າໜ້າທີ່ຜູ້ກະທຳການລະເມີດເຫຼົ່ານັ້ນ, ແລະ ຕໍ່ກັບເຈົ້າໜ້າທີ່ຕຳຫຼວດ ກໍຄືເຈົ້າໜ້າທີ່ຮັກສາຄວາມສະຫງົບທີ່ກະທຳຜິດກໍບໍ່ໄດ້ຮັບການຖືກລົງໂທດໃດໆ.

ພາກທີ 1. ການເຄົາລົບຕໍ່ຄວາມຊື່ສັດສຸຈະລິດຂອງບຸກຄົນ, ລວມທັງສິດເສລີພາບຈາກ:

ກ. ການຕັດອິດສະຫຼະພາບໂດຍພະລະການ ຫຼື ບໍ່ຖືກຕ້ອງຕາມຫຼັກກົດໝາຍ

ບໍ່ມີການລາຍງານທີ່ໜ້າເຊື່ອຖືໄດ້ວ່າ ລັດຖະບານ ຫຼື ຕົວແທນຂອງລັດຖະບານ ໄດ້ມີການສັງຫານຊີວິດໂດຍພາລະການ ຫຼື ຜິດຕໍ່ຫຼັກກົດໝາຍ, ເຊິ່ງລວມທັງການກໍ່ເຫດການກະບົດ.

ໃນຊຸມປີທີ່ຜ່ານມາ, ບໍ່ມີລາຍງານໃດໆກ່ຽວກັບກໍລະນີກຸ່ມຄົນທີ່ຖືກກ່າວຫາວ່າ ຖືກຂ້າໂດຍກອງກຳລັງທະຫານ ຫຼື ເຈົ້າໜ້າທີ່ຕຳຫຼວດ.

ຂ. ການຫາຍສາບສູນ

ມີລາຍງານກ່ຽວກັບເຫດການ ການຫາຍສາບສູນໜຶ່ງກໍລະນີເກີດຂຶ້ນພາຍໃນປີ: ໃນວັນທີ 15 ເດືອນທັນວາ, ມີກຸ່ມຄົນນອກເຄື່ອງແບບໄດ້ຖືກກ່າວຫາວ່າລັກພາຕົວ ທ. ສົມບັດ ສົມພອນ, ອາຍຸ 60 ປີ ເຊິ່ງເຫດການເກີດຂຶ້ນໃນນະຄອນຫຼວງວຽງຈັນ ພາຍຫຼັງທີ່ເຈົ້າໜ້າທີ່ຕຳຫຼວດຈໍລະຈອນ ໄດ້ສັ່ງໃຫ້ລາວຢຸດລົດຂອງລາວ, ຜູ້ກ່ຽວເປັນຫົວໜ້າອົງການຈັດຕັ້ງສັງຄົມທີ່ມີຊື່ສຽງ ແລະ ເປັນອະດີດຜູ້ກໍ່ຕັ້ງສະມາຄົມທີ່ບໍ່ຫວັງຜົນກຳໄລຄື ສູນຝຶກອົບຮົມຮ່ວມພັດທະນາ (PADETC). ລັດຖະບານໄດ້ປະຕິເສດ ຕໍ່ການຮັບຮູ້ວ່າຜູ້ກ່ຽວຢູ່ໃສ, ແລະ ການສືບສວນກໍ່ໄດ້ສືບຕໍ່ດຳເນີນການຈົນຮອດທ້າຍປີ.

ຄ. ການທໍລະມານ ແລະ ທາລຸນນະກຳອື່ນໆ, ຄວາມໄຮ້ມະນຸດສະທຳ, ຫຼື ການປະຕິບັດເຮັດໃຫ້ເສຍກຽດ ຫຼື ການລົງໂທດ

ກົດໝາຍຫ້າມບໍ່ໃຫ້ມີການທຸບຕີ ຫຼື ກະທຳທາລຸນຕໍ່ບຸກຄົນທີ່ຖືກຈັບກຸມ. ແຕ່ໃນພາກປະຕິບັດ, ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຮັກສາຄວາມສະຫງົບ ຍັງມີການທຳຮ້າຍນັກໂທດໃນບາງຄັ້ງຄາວ.

ໃນບາງຄັ້ງຄາວ, ຜູ້ຖືກກັກຕົວຖືກທຸບຕີ ແລະ ຖືກຂັງດ່ຽວຢູ່ໃນຫ້ອງມືດເປັນເວລາຫຼາຍວັນ, ແລະ ມີຫຼາຍກໍລະນີທີ່ເຈົ້າໜ້າທີ່ໃສ່ໂສ້ຫຼ່ານຂາ ຫຼື ເອົາປອກໄມ້ໃສ່ຂານັກໂທດໄວ້ເປັນເວລາດົນນານ. ການປະຕິບັດຕໍ່ນັກໂທດເຊັ່ນ: ການໃສ່ໂສ້ ແລະ ກະຫຼັບມື, ແລະ ຂັງດ່ຽວໃນຫ້ອງນ້ອຍທີ່ບໍ່ມີແສງສະຫ່ວາງ ແມ່ນມາດຕະຖານການລົງໂທດທົ່ວໄປໃນຄຸກໃຫຍ່, ແຕ່ຢູ່ບ່ອນຄຸມຂັງໃນລະດັບແຂວງ ຫຼື ເມືອງ ນັກໂທດຈະຖືກຫຼ່ານໂສ້ ຫຼື ໃສ່ກະຫຼັບມື ເພື່ອປ້ອງກັນການຫຼົບໜີ.

ສະພາບຂອງຄຸກ ແລະ ສູນກັກຂັງ

ສະພາບເງື່ອນໄຂສິ່ງອຳນວຍຄວາມສະດວກພາຍໃນຄຸກ ແລະ ສູນກັກຂັງ ມີຄວາມແຕກຕ່າງກັນຫຼາຍໃນແຕ່ລະບ່ອນ, ແລະ ໃນຄຸກບາງແຫ່ງຍັງຄົງມີສະພາບທີ່ຮ້າຍແຮງຢູ່. ມີຄຸກທີ່ແຍກອອກຕ່າງຫາກສຳລັບກັກຂັງຊາວຕ່າງຊາດ.

<u>ສະພາບທາງກາຍຍະພາບ</u>: ຄຸກຊຳເຄ້ ທີ່ນະຄອນຫຼວງວຽງຈັນ ເປັນຄຸກໃຫຍ່ທີ່ສຸດຂອງປະເທດ ມີນັກໂທດຊາຍປະມານ 550 ຄົນ ແລະ ນັກໂທດຍິງປະມານ 150 ຄົນ ແຍກຂັງຕາມເພດ. ຄຸກດັ່ງກ່າວ ຕັ້ງຢູ່ບົນພື້ນທີ່ຂະໜາດ 12 ເອເຄີ (acre) ເຊິ່ງເຈົ້າໜ້າທີ່ລະບຸວ່າ ຖືກສ້າງຂຶ້ນໃນປີ 1966 ແລະ ອອກແບບເພື່ອຮອງຮັບນັກໂທດຈຳນວນ 700 ຄົນ. ເຖິງແມ່ນວ່າ ບໍ່ມີສະຖິຕິທາງການທີ່ໜ້າເຊື່ອຖືສັງລວມທັງໝົດຈຳນວນພົນ ຫຼື ເພດ ຂອງນັກໂທດທີ່ຖືກຄຸມຂັງ, ແຕ່ກໍ່ມີການລາຍງານວ່າ ມີການຄຸມຂັງນັກໂທດເດັກຈຳນວນໜຶ່ງ ລວມກັບນັກໂທດຜູ້ໃຫຍ່. ເຫັນໄດ້ຢ່າງຊັດເຈນວ່າ ຫ້ອງຂັງມີຄວາມແອອັດຫຼາຍ. ນັກໂທດມີນ້ຳໃຊ້ທີ່ພຽງພໍ. ການແບ່ງປັນອາຫານໃຫ້ພຽງພໍແມ່ນເປັນໄປໄດ້ຍາກ, ແລະ ມີລາຍງານວ່າ ນັກໂທດສາມາດປູກຕົ້ນໄມ້ກິນໝາກ ແລະ ຜັກ ເພື່ອເປັນອາຫານເສີມເພີ່ມໃຫ້ແກ່ພວກເຂົາເຈົ້າເອງ.

ມີຄຸກຈຳນວນໜຶ່ງທີ່ບໍ່ແມ່ນຄຸກຊຳເຄ້ ຮຽກຮ້ອງໃຫ້ຜູ້ຕ້ອງຂັງ ຈ່າຍເງິນຄືນໃຫ້ເຈົ້າໜ້າທີ່ ເພື່ອທົດແທນຄ່າໃຊ້ຈ່າຍຂອງອາຫານທີ່ກິນ ໃນລະຫ່ວາງຖືກຄຸມຂັງ. ນັກໂທດທີ່ຖືກຄຸມຂັງໃນຄຸກໃຫຍ່ໃນເມືອງຫຼວງ ໂດຍທົ່ວໄປແລ້ວ ແມ່ນໄດ້ຮັບສິ່ງອຳນວຍຄວາມສະດວກຂອງທາງການ ດີກວ່າຫຼາຍ ເມື່ອທຽບ ກັບຜູ້ທີ່ຖືກຄຸມຂັງໃນຄຸກນ້ອຍຂັ້ນແຂວງ.

ເຖິງແມ່ນວ່າ ນັກໂທດທັງໝົດສາມາດເຂົ້າເຖິງຫ້ອງກວດສຸຂະພາບ ເຊິ່ງປົກກະຕິແລ້ວຈະແມ່ນເຈົ້າໜ້າທີ່ຜູ້ທີ່ເປັນໝໍ ຫຼື ພະຍາບານເປັນຜູ້ກວດໃຫ້, ແຕ່ສິ່ງອຳນວຍຄວາມສະດວກທາງການແພດ ປົກກະຕິແລ້ວແມ່ນຂາດເຂີນ. ນັກໂທດສາມາດ ເຂົ້າເຖິງພຽງແຕ່ການດູແລສຸຂະພາບຂັ້ນພື້ນຖານ, ສ່ວນການປິ່ນປົວໂລກໄພໄຂ້ເຈັບທີ່ຮຸນແຮງ ແມ່ນບໍ່ສາມາດຕອບສະໜອງໄດ້. ຕົວຢ່າງ: ໃນຄຸກຊຳເຄ້ ມີຫ້ອງກວດພະຍາດໜຶ່ງຫ້ອງ ທີ່ມີຕຽງນອນຄົນເຈັບຈຳນວນສີ່ຕຽງ ແລະ ມີພະນັກງານແພດສາມຄົນຕໍ່ກັບນັກໂທດຈຳນວນ 700 ຄົນ. ນັກໂທດຈະໄດ້ຮັບການສັກຢາວັກຊີນ ໃນເວລາທີ່ເຂົ້າມາໃນຄຸກແຕ່ທຳອິດ; ຖ້າຫາກມີການເຈັບປ່ວຍ, ພວກເຂົາຕ້ອງຈ່າຍຄ່າຢາປິ່ນປົວເອງ. ໃນກໍລະນີການອຳນວຍຄວາມສະດວກບາງຢ່າງ, ນັກໂທດສາມາດຈັດໃຫ້ໄດ້ ຮັບການປິ່ນປົວຢູ່ບັນດາໂຮງໝໍຕຳຫຼວດ, ແລະ ໃນກໍລະນີສຸກເສີນ ເຈົ້າໜ້າທີ່ກໍ່ສົ່ງນັກໂທດໄປຍັງໂຮງໝໍດັ່ງກ່າວ. ໃນ ປີນີ້, ບໍ່ມີຂໍ້ມູນການເສຍຊີວິດໃນຄຸກ ຫຼື ໃນສູນກັກກັນ.

<u>ການບໍລິຫານ</u>: ບໍ່ມີຂໍ້ມູນກ່ຽວກັບການບັນທຶກເກັບກຳຂໍ້ມູນທີ່ພຽງພໍຕໍ່ກັບນັກໂທດ. ໃນບາງກໍລະນີ, ລັດຖະບານ ໄດ້ອະນຸຍາດໃຫ້ຜູ້ຕ້ອງຫາທີ່ກະທຳຜິດບໍ່ຮຸນແຮງສາມາດຖືກປ່ອຍຕົວໄດ້ ໂດຍປາສະຈາກ ການຕັດສິນຄະດີ ໃຫ້ພວກເຂົາຖືກກັກຂັງໃນຄຸກຢ່າງເປັນທາງການ.

ບໍ່ມີການແຕ່ງຕັ້ງນັກໄກ່ເກ່ຍ ຫຼື ຜູ້ສືບສວນເຮັດໜ້າທີ່ຕາງໜ້າໃຫ້ນັກໂທດ ຫຼື ຜູ້ຖືກຄຸມຂັງ. ເຈົ້າໜ້າທີ່ດູແລ ຄຸກເປັນ ຜູ້ວາງນະ�โยบายກ່ຽວກັບການຢ້ຽມຢາມຄຸກ. ຕາມທຳມະດາແລ້ວ, ສະມາຊິກໃນຄອບຄົວສາມາດຢ້ຽມນັກໂທດ ແລະ ຜູ້ຖືກຄຸມຂັງໄດ້ເດືອນລະຄັ້ງ. ອີງຕາມຂໍ້ກຳນົດຂອງລັດຖະທຳມະນູນ, ນັກໂທດ ແລະ ຜູ້ຖືກຄຸມຂັງສາມາດປະຕິບັດ ກິດຈະກຳຕາມຄວາມເຊື່ອຖືທາງສາດສະໜາໄດ້, ແຕ່ວ່າເຈົ້າໜ້າທີ່ບໍ່ໄດ້ຕອບສະໜອງສິ່ງອຳນວຍຄວາມສະດວກໃດໆ ໃຫ້.

ເຈົ້າໜ້າທີ່ອະນຸຍາດໃຫ້ນັກໂທດ ແລະ ຜູ້ຖືກຄຸມຂັງສາມາດສົ່ງຄຳຮ້ອງຟ້ອງເຖິງເຈົ້າໜ້າທີ່ພິຈາລະນາຄະດີໄດ້ ໂດຍ ບໍ່ມີການກວດສອບຄຳຮ້ອງຟ້ອງແຕ່ຢ່າງໃດ ແລະ ສາມາດຮຽກຮ້ອງໃຫ້ມີການສືບສວນສອບສວນ ຂໍ້ກ່າວຫາທີ່ໜ້າ ເຊື່ອຖື ກ່ຽວກັບສະພາບການທີ່ໄຮ້ມະນຸດສະທຳ, ແຕ່ແນວໃດກໍຕາມ ກໍ່ບໍ່ມີລາຍງານວ່າ ພວກນັກໂທດ, ຜູ້ຖືກຄຸມຂັງ ຫຼື ສະມາຊິກຄອບຄົວຂອງພວກເຂົາ ໄດ້ເຮັດຄຳຮ້ອງຟ້ອງດັ່ງກ່າວຕໍ່ເຈົ້າໜ້າທີ່ ເນື່ອງຈາກຢ້ານກົວວ່າຈະເປັນການ ເຮັດໃຫ້ສະພາບຂອງສະຖານຄຸມຂັງມີຄວາມເຄັ່ງຕຶງຫຼາຍຂຶ້ນ. ພ້ອມດຽວກັນນັ້ນ, ກໍບໍ່ມີການຮັບຮູ້ວ່າ ໄດ້ມີການສືບສວນສອບສວນກ່ຽວກັບ ຄຳຮ້ອງຟ້ອງ.

<u>ການຕິດຕາມກວດກາ</u>: ກະຊວງປ້ອງກັນຄວາມສະຫງົບ ໄດ້ຕິດຕາມກວດກາສະພາບຂອງຄຸກ ແລະ ສູນກັກຂັງ.

ລັດຖະບານບໍ່ອະນຸຍາດ ໃຫ້ມີການກວດກາສະພາບດັ່ງກ່າວແບບອິສະຫຼະຢ່າງເປັນປົກກະຕິ. ໃນບາງຄັ້ງຄາວ ເຈົ້າໜ້າທີ່ໄດ້ອະນຸຍາດໃຫ້ ເຈົ້າໜ້າທີ່ການທູດຂອງຕ່າງປະເທດ ເຂົ້າຢ້ຽມຢາມບາງຄຸກຄຸມຂັງ, ແຕ່ການເຂົ້າພົບດັ່ງກ່າວ
ກໍ່ມີຂໍ້ຈຳກັດທີ່ຕ້ອງປະຕິບັດຕາມຢ່າງເຄັ່ງຄັດ.

ງ. ການຈັບກຸມ ຫຼື ຄຸມຂັງໂດຍພະລະການ

ກົດໝາຍຫ້າມການຈັບກຸມ ແລະ ຄຸມຂັງໂດຍພະລະການ, ແຕ່ເຈົ້າໜ້າທີ່ຂອງລັດບາງຄົນ ບໍ່ໄດ້ເຄົາລົບຕໍ່ກົດບັນຍັດເຫຼົ່ານີ້, ແລະ ປະກົດການການຈັບກຸມ ແລະ ຄຸມຂັງໂດຍພະລະການ ຍັງເກີດຂຶ້ນຢູ່.

ໃນຊ່ວງຕົ້ນເດືອນສິງຫາ ລັດຖະບານໄດ້ເລີ່ມຄຸມຕົວ ແລະ ເຄື່ອນຍ້າຍຜູ້ໃຫຍ່ຈຳນວນໜຶ່ງທີ່ເຫັນວ່າເປັນຄົນຂໍທານ ແລະ ຄົນຈອນຈັດ ອອກຈາກຖະໜົນຕ່າງໆໃນນະຄອນຫຼວງວຽງຈັນ ເພື່ອກະກຽມນະຄອນຫຼວງສຳລັບການເປັນ ເຈົ້າພາບກອງປະຊຸມສຸດຍອດລະດັບສາກົນໃນເດືອນພະຈິກ. ອີງຕາມລາຍງານຂອງລັດຖະບານ, ເຈົ້າໜ້າທີ່ໄດ້ສົ່ງຄົນຈອນຈັດຈຳນວນໜຶ່ງຄືນໄປບ້ານເຮືອນຂອງເຂົາເຈົ້າ ແລະ ສົ່ງຈຳນວນໜຶ່ງໄປຍັງທີ່ຢູ່ອາໄສຊົ່ວຄາວທີ່ຕັ້ງຢູ່ເຂດຊານເມືອງ ຂອງນະຄອນຫຼວງວຽງຈັນ ເຊິ່ງສາມາດຮອງຮັບໄດ້ປະມານ 75 ຄົນ (ຜູ້ໃຫຍ່). ພ້ອມກັນນັ້ນ, ລັດຖະບານຍັງໄດ້ ເຮັດວຽກຮ່ວມກັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (NGO) ອົງການໜຶ່ງ ເພື່ອສະໜອງທີ່ພັກພາອາໄສສຸກເສີນ ແລະ ການສຶກສານອກລະບົບໃຫ້ແກ່ເດັກນ້ອຍ ທີ່ຖືກຍ້າຍອອກຈາກຖະໜົນຕ່າງໆໃນຕົວເມືອງ, ແຕ່ມີລາຍງານວ່າ ມີ ການຍ້າຍເດັກຈອນຈັດໄປທີ່ບ່ອນພັກພາອາໄສດັ່ງກ່າວພຽງແຕ່ໜຶ່ງຄົນ ໃນຈຳນວນເດັກຈອນ ຈັດທີ່ຄາດກະວ່າມີປະມານ 250 ຄົນ.

ໃນວັນທີ 19 ເດືອນພະຈິກ, ເຈົ້າໜ້າທີ່ຕຳຫຼວດໄດ້ຈັບ ແລະ ກັກຂັງຜູ້ຍິງຄົນໜຶ່ງ ທີ່ແຂວງຄຳມ່ວນ ດ້ວຍເຫດຜົນທີ່ບໍ່ ຈະແຈ້ງ. ຈົນເຖິງທ້າຍປີ, ມີລາຍງານວ່າ ນາງຍັງຖືກຄວບຄຸມຕົວ ໂດຍບໍ່ມີການຕັ້ງຂໍ້ຫາຢ່າງເປັນທາງການ.

ພາລະບົດບາດຂອງເຈົ້າໜ້າທີ່ຕຳຫຼວດ ແລະ ເຄື່ອງມືໃນການຮັກສາຄວາມປອດໄພ

ກະຊວງປ້ອງກັນຄວາມສະຫງົບ ມີບົດບາດໃນການຮັກສາຄວາມສະຫງົບພາຍໃນ ແຕ່ກໍ່ມີສ່ວນຮ່ວມໃນພາລະ ບົດບາດ ດ້ານການຄຸ້ມຄອງລັດ ຮ່ວມກັບກຳລັງປ້ອງກັນຄວາມສະຫງົບຂອງກະຊວງປ້ອງກັນປະເທດ ແລະ ພປປລ ແລະ ບັນດາອົງການແຖວໜ້າຂອງ ພປປລ. ກະຊວງປ້ອງກັນຄວາມສະຫງົບ ປະກອບມີ ຕຳຫຼວດທ້ອງຖິ່ນ, ຕຳ ຫຼວດຈະລາຈອນ, ຕຳຫຼວດກວດຄົນເຂົ້າເມືອງ ແລະ ຕຳຫຼວດປ້ອງກັນຄວາມສະຫງົບ (ລວມທັງຕຳຫຼວດຊາຍແດນ), ລວມທັງໜ່ວຍງານຕຳຫຼວດປະກອບອາວຸດອື່ນໆອີກ. ນອກຈາກນັ້ນ, ກົມຕຳຫຼວດສື່ສານຍັງຮັບຜິດຊອບໃນການຕິດຕາມກວດກາການສື່ສານທາງໂທລະສັບ ແລະ

ທາງອີເລັກໂຕຣນິກອື່ນໆນຳອີກ. ສຳລັບກຳລັງປະກອບອາວຸດ ມີຄວາມຮັບຜິດຊອບຕໍ່ກັບຄວາມສະຫງົບພາຍໃນ ທີ່ລວມທັງ ການປ້ອງກັນລັດທິການກໍ່ການຮ້າຍ ແລະ ການກໍ່ເຫດຈະລາຈົນ ແລະ ຍັງຄຸ້ມຄອງລະບົບໜ່ວຍງານ ກອງຫຼວນບ້ານນຳອີກ.

ການຍົກເວັ້ນບໍ່ລົງ�โทດຕໍ່ຜູ້ກະທຳຜິດຍັງຄົງເປັນບັນຫາ ເຊັ່ນດຽວກັນກັບບັນຫາການສໍ້ລາດບັງຫຼວງຂອງເຈົ້າໜ້າ ທີ່ຕຳຫຼວດ; ບໍ່ມີສະຖິຕິອ້າງອີງລະດັບຂອບເຂດຂອງພວກເຂົາ. ກົມກວດກາຂອງກະຊວງປ້ອງກັນຄວາມສະຫງົບ ໄດ້ຕິດຕັ້ງກ່ອງຮັບຄຳຄິດເຫັນໄວ້ຢູ່ຕາມສະຖານທີ່ສາທາລະນະຕ່າງໆໃນທົ່ວປະເທດ ເພື່ອໃຫ້ພົນລະ ເມືອງສາມາດປ່ອນຄຳຮ້ອງຟ້ອງຢ່າງເປັນລາຍລັກອັກສອນ, ແຕ່ໃນຂະນະດຽວກັນ ສະຖິຕິໃນການນຳໃຊ້ກ່ອງຮັບຄຳຮ້ອງດັ່ງກ່າວ ບໍ່ສາມາດຕອບສະໜອງໄດ້.

ລັດຖະບານ ໄດ້ສືບຕໍ່ຮ່ວມມືກັບອົງການຈັດຕັ້ງສາກົນ ເພື່ອຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດໃນການສ້າງຄວາມ ເຂັ້ມແຂງທາງດ້ານການບັງຄັບໃຊ້ກົດໝາຍ ແລະ ຮັບມືກັບຂະບວນການຄ້າ ແລະ ເສບຢາເສບຕິດທີ່ເພີ່ມຂຶ້ນ ພ້ອມ ທັງບັນຫາການກໍ່ອາດສະຍາກຳທີ່ກ່ຽວຂ້ອງ ແລະ ການສໍ້ລາດບັງຫຼວງຂອງເຈົ້າໜ້າທີ່ຕຳຫຼວດ.

ຂັ້ນຕອນ ແລະ ການປະຕິບັດໃນການຈັບກຸມ ໃນລະຫ່ວາງການຄວບຄຸມຕົວ

ເຈົ້າໜ້າທີ່ຕຳຫຼວດ ແລະ ທະຫານ ມີອຳນາດໃນການຈັບກຸມ ເຖິງແມ່ນວ່າຕາມປົກກະຕິແລ້ວ ມີພຽງແຕ່ຕຳຫຼວດເທົ່າ ນັ້ນ ເປັນຜູ້ດຳເນີນການ. ກົດໝາຍໃຫ້ສິດແກ່ ຜູ້ຖືກຄວບຄຸມຕົວ ຊຶ່ງຕ້ອງໄດ້ຮັບການຕັດສິນຕາມຂັ້ນຕອນຂະບວນຍຸຕິ ທຳ ຕໍ່ກັບຄວາມຖືກຕ້ອງໃນການຖືກຄວບຄຸມຕົວ ຂອງພວກກ່ຽວຢ່າງຮີບດ່ວນ. ໃນປະກົດການທົ່ວໄປ, ກົດໝາຍຍັງ ກຳນົດໄວ້ວ່າ ພາຍໃນເວລາ 24 ຊົ່ວໂມງ ຂອງການຄວບຄຸມຕົວ, ເຈົ້າໜ້າທີ່ຕ້ອງແຈ້ງໃຫ້ຜູ້ຖືກຄວບຄຸມຕົວຮັບຮູ້ ກ່ຽວກັບຂໍ້ກ່າວຫາຂອງພວກກ່ຽວ ແລະ ສົ່ງຂ່າວໃຫ້ຍາດພີ່ນ້ອງໃກ້ຊິດຮັບຊາບກ່ຽວກັບການກັກຕົວພວກເຂົາ. ບໍ່ມີການຮັບປະກັນວ່າ ສະມາຊິກຄອບຄົວ ຈະສາມາດພົບກັບນັກ�โทດຫຼືບໍ່ ແຕ່ໂດຍທົ່ວໄປແລ້ວ ແມ່ນໄດ້ ຮັບອະນຸຍາດ. ມີລະບົບການປະກັນຕົວຜູ້ຖືກຄວບຄຸມຕົວ, ແຕ່ກໍ່ບໍ່ມີການເຄື່ອນໄຫວ ແລະ ຖືກຈັດຕັ້ງປະຕິບັດແບບພະລະການ. ມີລະບຽບຂັ້ນຕອນສຳລັບການຈັບກຸມທີ່ບ້ານຂອງຜູ້ຖືກຄວບຄຸມຕົວ, ໂດຍສະເພາະແມ່ນເຫດຜົນທາງດ້ານສຸຂະພາບ, ແລະ ມີການລາຍງານສະເພາະກ່ຽວກັບຜູ້ຖືກຄວບຄຸມຕົວ ທີ່ ຖືກດຳເນີນການໃນຮູບແບບດັ່ງກ່າວ. ພາຍໃນປີນີ້ ບໍ່ມີການລາຍງານກ່ຽວກັບ ຜູ້ຖືກຄຸມຂັງ ໄດ້ຖືກປະຕິບັດໃນຮູບ ແບບຫ້າມການຕິດຕໍ່ສື່ສານກັບຜູ້ອື່ນ.

ກົດໝາຍວ່າດ້ວຍທະນາຍຄວາມ ທີ່ຖືກປະກາດນຳໃຊ້ ໃນວັນທີ 16 ເດືອນມັງກອນ ໃຫ້ສິດແກ່ ປະຊາຊົນຜູ້ທີ່ຖືກ ກັກຕົວ, ຖືກຈັບ ຫຼື ຜູ້ທີ່ຢູ່ໃນຄຸກ ໃນການເປັນຕົວແທນທາງກົດໝາຍໄດ້ ຖ້າມີການຮຽກຮ້ອງ.

<u>ການຈັບກຸມໂດຍພະລະການ:</u> ເຈົ້າໜ້າທີ່ຕຳຫຼວດ ຍັງຄົງສືບຕໍ່ດຳເນີນການຈັບກຸມແບບນີ້ຢູ່ທົ່ວໆໄປ ໂດຍອາໄສຂໍ້ບັນ

ຍັດຂອງກົດໝາຍທີ່ກຳນົດວ່າ ໜັງສືໝາຍຈັບ ແມ່ນບໍ່ມີຄວາມຈຳເປັນສຳລັບການຈັບກຸມຜູ້ກະທຳຜິດທາງອາຍາ ຫຼື ໃນກໍລະນີສຸກເສີນ. ມີລາຍງານວ່າ ບາງເທື່ອເຈົ້າໜ້າທີ່ຕຳຫຼວດໄດ້ສວຍໃຊ້ການຈັບກຸມ ເປັນເຄື່ອງມື ໃນການຂົ່ມຂູ່ບຸກຄົນ ຫຼື ຮຽກຮ້ອງການໃຫ້ສິນບົນຕ່າງໆ.

<u>ການຄວບຄຸມຕົວໄວ້ເພື່ອລໍຖ້າການຕັດສິນ:</u> ມີຂໍ້ບັນຍັດຕາມກົດໝາຍ ກຳນົດຈຳກັດການຄຸມຂັງໂດຍບໍ່ມີການຕັດສິນຄະດີເປັນເວລາໜຶ່ງປີ. ໄລຍະເວລາຂອງການຄຸມຂັງໂດຍປາສະຈາກການຮັບຟັງການຕັດສິນ ຫຼື ຂໍ້ກ່າວຫາຢ່າງເປັນທາງການກໍ່ຖືກຈຳກັດຢູ່ໃນໄລຍະເວລາໜຶ່ງປີເຊັ່ນດຽວກັນ. ມີລາຍງານວ່າ ອົງການໄອຍະການປະຊາຊົນສູງສຸດໄດ້ມີຄວາມພະຍາຍາມເພື່ອຮັບປະກັນວ່າ ເຈົ້າໜ້າທີ່ຈະນຳເອົານັກ�โທດຖືກຄຸມຂັງທັງໝົດ ເຂົ້າສູ່ຂະບວນການຕັດສິນຄະດີ ພາຍໃນກຳນົດເວລາໜຶ່ງປີ, ແຕ່ຂໍ້ຮຽກຮ້ອງດັ່ງກ່າວ ບາງຄັ້ງຄາວ ກໍ່ຖືກລະເລີຍ. ອົງການໄອຍະການສູງສຸດຕ້ອງອະນຸຍາດໃຫ້ເຈົ້າໜ້າທີ່ຕຳຫຼວດ ສືບຕໍ່ກັກຂັງເພື່ອລໍຖ້າຜົນການສືບສວນສອບສວນຄະດີ ໃນກໍລະນີທີ່ຍັງສົງໄສ. ການອະນຸຍາດດັ່ງກ່າວ ແມ່ນກຳນົດໃຫ້ເປັນໄລຍະເວລາສາມເດືອນ, ແລະ ຜູ້ຕ້ອງສົງໄສດັ່ງກ່າວຕ້ອງຖືກປ່ອຍຕົວພາຍຫຼັງໜຶ່ງປີ ຖ້າຫາກເຈົ້າໜ້າທີ່ຕຳຫຼວດບໍ່ສາມາດຊອກຫາຫຼັກຖານພຽງພໍເພື່ອດຳເນີນຂໍ້ກ່າວຫາໄດ້. ໃນບາງຄັ້ງ ເຈົ້າໜ້າທີ່ຍັງຄົງສືບຕໍ່ກັກຂັງນັກ�โທດ ພາຍຫຼັງທີ່ພວກກ່ຽວຖືກພິພາກສາຄະດີຮຽບຮ້ອຍແລ້ວ, ໂດຍສະເພາະໃນກໍລະນີ ທີ່ນັກ�โທດບໍ່ສາມາດຈ່າຍຄ່າປັບໄໝຂອງສານໄດ້. ໃນອີກບາງກໍລະນີ, ນັກ�โທດໄດ້ຮັບການປ່ອຍຕົວໄປໃນເງື່ອນໄຂທີ່ວ່າ ພວກກ່ຽວຮັບປະກັນວ່າ ຈະຈ່າຍຄ່າປັບໄໝຂອງສານຕາມພາຍຫຼັງ.

<u>ການອະໄພຍະ�โທດ:</u> ໃນວັນທີ 2 ເດືອນທັນວາ, ລັດຖະບານໄດ້ອອກດຳລັດຂອງປະທານປະເທດວ່າດ້ວຍການໃຫ້ນິລະโທດສະກຳ ແກ່ນັກ�โທດ 517 ຄົນ, ໃນນັ້ນ ເປັນເພດຍິງ 82 ຄົນ ແລະ ຕ່າງປະເທດຈຳນວນ 21 ຄົນ.

ຈ. ການປະຕິເສດຕໍ່ການຕັດສິນຄະດີທີ່ຍຸຕິທຳຕໍ່ສັງຄົມ

ກົດໝາຍ ອະນຸຍາດໃຫ້ມີໜ່ວຍງານຕຸລາການທີ່ເປັນອິສະຫຼະ, ແຕ່ການລະເລີຍຕໍ່ການລົງ�โທດ ແລະການສໍ້ລາດບັງຫຼວງ ຍັງຄົງສືບຕໍ່ເປັນບັນຫາ, ແລະ ມີລາຍງານວ່າ ມີຜູ້ພິພາກສາບາງຄົນ ມີການພົວພັນກັບການຮັບສິນບົນ. ແຕ່ເຖິງຢ່າງໃດກໍ່ຕາມ, ໃນປີນີ້ບໍ່ມີການລາຍງານວ່າ ເຈົ້າໜ້າທີ່ລັດຖະບານ ຫຼື ພັກ ມີອິດທິພົນຕໍ່ສານ. ສະພາແຫ່ງຊາດ ອາດຍົກຍ້າຍຜູ້ພິພາກສາອອກຈາກຕຳແໜ່ງ ເນື່ອງຈາກ "ການກະທຳທີ່ບໍ່ຖືກຕ້ອງເໝາະສົມ" ແຕ່ກໍ່ບໍ່ໄດ້ມີການດຳເນີນການດັ່ງກ່າວພາຍໃນປີນີ້.

ຂັ້ນຕອນການຕັດສິນຄະດີ

ຕາມກົດໝາຍ, ຈຳເລີຍ ຍັງມີຄວາມຫວັງຕໍ່ຂໍ້ສັນນິຖານຂອງການເປັນຜູ້ບໍລິສຸດ, ແຕ່ໃນພາກປະຕິບັດ ໜ່ວຍງານຕຸລາການໄດ້ຕັດສິນວ່າ ມີຄວາມຜິດ ຫຼື ບໍລິສຸດໄວ້ລ່ວງໜ້າ, ໂດຍການຕັດສິນດັ່ງກ່າວ ແມ່ນອີງໃສ່ຜົນໄດ້ຮັບໃນບົດລາຍງານ ການສືບສວນສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ຫຼື ໄອຍະການ. ການຕັດສິນຄະດີທັງ

ໝົດ ລວມທັງການຕັດສິນຄະດີອາຍາ ແມ່ນສ່ວນໜ້ອຍທີ່ສຸດ ທີ່ຈະຕັດສິນໂດຍອີງໃສ່ການກວດກາໄວ້ກ່ອນ ກ່ຽວກັບສົມມຸດຕິຖານຂອງຂໍ້ກ່າວຫາ ແລະ ການທົບທວນຄືນຫຼັກຖານ. ບໍ່ມີການນຳໃຊ້ຄະນະລູກຂຸນ. ການຕັດສິນຄະດີແມ່ນເປີດເຜີຍ, ນອກຈາກກໍລະນີທີ່ກ່ຽວພັນກັບກົດໝາຍຄອບຄົວບາງປະເພດ ຫຼື ທີ່ກ່ຽວຂ້ອງກັບຄວາມໝັ້ນຄົງຂອງຊາດ, ຄວາມລັບຂອງລັດຖະບານ, ຫຼື ກ່ຽວກັບເດັກນ້ອຍທີ່ມີອາຍຸຕ່ຳກວ່າ 16 ປີ.

ກົດໝາຍອະນຸຍາດໃຫ້ຈຳເລີຍມີສິດທີ່ຈະປົກປ້ອງຕົນເອງ ດ້ວຍການຊ່ວຍເຫຼືອຂອງທະນາຍຄວາມ ຫຼື ບຸກຄົນອື່ນໆ. ລັດຖະບານຈະສະໜອງທະນາຍໃຫ້ຝ່າຍຈຳເລີຍ ພຽງແຕ່ໃນກໍລະນີຄະດີກ່ຽວພັນກັບເດັກນ້ອຍເທົ່ານັ້ນ, ຄະດີທີ່ອາດຈະເປັນຜົນໃຫ້ມີການຕັດສິນຈຳຄຸກຕະຫຼອດຊີວິດ ຫຼື ປະຫານຊີວິດ, ແລະ ໂດຍສະເພາະຄະດີທີ່ຖືກພິຈາລະນາວ່າມີຄວາມສະຫຼັບຊັບຊ້ອນ ເຊັ່ນຄະດີພົວພັນກັບຄົນຕ່າງປະເທດ. ຈຳເລີຍບໍ່ມີສິດໃນການຖືກແຈ້ງໃຫ້ຊາບຢ່າງໄວວາ ແລະ ລາຍລະອຽດ ກ່ຽວກັບຂໍ້ການກ່າວຫາຕໍ່ເຂົາເຈົ້າ, ແຕ່ກົດໝາຍກຳນົດວ່າ ເຈົ້າໜ້າທີ່ຕ້ອງແຈ້ງໃຫ້ບຸກຄົນຜູ້ນັ້ນຮັບຮູ້ໃນສິດທິຂອງເຂົາເຈົ້າ. ຜູ້ຖືກກ່າວຫາບໍ່ມີສິດທີ່ຈະກວດສອບຫຼັກຖານທີ່ລັດຖະບານເປັນຜູ້ກຳໄວ້, ແຕ່ຜູ້ຕ້ອງຫາອາດຂໍເບິ່ງຫຼັກຖານດັ່ງກ່າວໄດ້
ຖ້າວ່າເຈົ້າໜ້າທີ່ຫາກສຳເລັດບົດລາຍງານການສືບສວນສອບສວນແລ້ວ. ໃນກໍລະນີຄະດີທີ່ຮ້າຍແຮງກວ່າ (ເຊັ່ນຄະດີກ່ຽວກັບຢາເສບຕິດ ທີ່ມີການຕັດສິນລົງໂທດໃຫ້ຈຳຄຸກຕະຫຼອດຊີວິດ), ຕາມທຳມະດາແລ້ວ ເຈົ້າໜ້າທີ່ຈັບກຸມຈະບໍ່ອະນຸຍາດໃຫ້ຜູ້ຕ້ອງຫາກວດສອບຫຼັກຖານທີ່ລັດຖະບານເປັນຜູ້ກຳໄວ້.
ບໍ່ມີການກຳນົດສິດທິທາງກົດໝາຍທີ່ຈະໃຫ້ເວລາ ແລະ ສິ່ງອຳນວຍຄວາມສະດວກຢ່າງພຽງພໍ ໃນການກະກຽມຄຳຕອບຂອງຜູ້ຕ້ອງຫາ. ຈຳເລີຍອາດຈະມີຜູ້ໃດຜູ້ໜຶ່ງຊ່ວຍເຂົາເຈົ້າໃນການກະກຽມ ໃນສ່ວນທີ່ເປັນລາຍລັກອັກສອນ ແລະ ຕິດຕາມເຂົາເຈົ້າມາໃນສະຖານທີ່ຕັດສິນຄະດີ, ແຕ່ມີພຽງຈຳເລີຍເທົ່ານັ້ນ ທີ່ຈະຂຶ້ນໃຫ້ປາກຄຳຕໍ່ສານໃນການຕັດສິນຄະດີອາຍາ. ຈຳເລີຍໄດ້ຮັບອະນຸຍາດໃຫ້ຖາມຄຳຖາມ ແລະ ສາມາດສະເໜີພະຍານ ແລະ ຫຼັກຖານໃນນາມຕົນເອງ. ຈຳເລີຍມີສິດຂໍອຸທອນໄດ້.

ຄູ່ກໍລະນີຄະດີຄວາມໃນສານ ອາດຈະຄັດເລືອກເອົາສະມາຊິກຂອງສະພາທະນາຍຄວາມລາວ ເພື່ອເປັນຕົວແທນໃຫ້ເຂົາເຈົ້າເອງໃນການຕັດສິນຄະດີ. ຕາມທຳມະດາ ສະພາທະນາຍຄວາມ ເປັນໜ່ວຍງານອິສະຫຼະ ແຕ່ກໍ່ໄດ້ຮັບການຊີ້ນຳຈຳນວນໜຶ່ງ ຈາກກະຊວງຍຸຕິທຳ. ສະພາທະນາຍຄວາມ ມີໜ້າທີ່ການຊ່ວຍໃຫ້ຄຳປຶກສາດ້ານກົດໝາຍສາມແຫ່ງຢູ່ ວຽງຈັນ, ຈຳປາສັກ ແລະ ອຸດົມໄຊ ໃຫ້ການບໍລິການດ້ານກົດໝາຍແກ່ພົນລະເມືອງ ຕາມຄວາມຈຳເປັນ. ມີຫຼາຍເຫດຜົນ ລວມທັງການຮັບຮູ້ທົ່ວໄປວ່າ ທະນາຍຄວາມ ບໍ່ສາມາດແຊກແຊງການຕັດສິນຂອງສານໄດ້, ຈຳເລີຍທັງໝົດ ເລືອກທີ່ຈະບໍ່ນຳໃຊ້ທະນາຍຄວາມ ຫຼື ຕົວແທນຂອງເຂົາເຈົ້າ.

ຄະນະຜູ້ພິພາກສາທັງໝົດຂອງປະເທດ ແມ່ນສະມາຊິກ ພປປລ. ຜູ້ພິພາກສາທັງໝົດ ໄດ້ຮັບການອົບຮົມທາງກົດໝາຍໃນຂັ້ນພື້ນຖານເທົ່ານັ້ນ, ແລະ ຫ້ອງການສານເຂດຈຳນວນໜຶ່ງ ມີເອກະສານອ້າງອີງເພື່ອເປັນທິດຊີ້ນຳພຽງເລັກນ້ອຍ ຫຼື ບໍ່ມີເລີຍ. ຄະນະກຳມາທິການກົດໝາຍຂອງສະພາແຫ່ງຊາດ ບາງຄັ້ງກໍ່ໄດ້ມີການທົບທວນຄືນຄຳຕັດສິນຂອງສານປະຊາຊົນສູງສຸດເພື່ອກວດກາ "ຄວາມຖືກຕ້ອງ" ແລະ ສົ່ງຄະດີຄືນໄປໃຫ້ສານ ຫຼື ອົງການໄອຍະການປະຊາຊົນສູງສຸດເພື່ອທົບທວນຄືນ ໃນກໍລະນີທີ່ຄະນະກຳມາທິການເຊື່ອວ່າ ການຕັດສິນ

ດັ່ງກ່າວບໍ່ເໝາະສົມ.

ນັກໂທດ ແລະ ຜູ້ຖືກຄຸມຂັງໃນຄະດີການເມືອງ

ບໍ່ມີສະຖິຕິທາງການ ຫຼື ຂໍ້ມູນຕົວເລກທີ່ເຊື່ອຖືໄດ້ ກ່ຽວກັບຈຳນວນຂອງນັກໂທດທາງການເມືອງ, ແຕ່ລັດຖະບານ ໄດ້ຢັ້ງຢືນວ່າ ສີ່ບຸກຄົນ ຕໍ່ໄປນີ້ ຍັງຄົງຕ້ອງຄະດີຢູ່ໃນຄຸກ:

ທອງປະເສີດ ເກື້ອກູນ ແລະ ແສງອາລຸນ ເພັງພັນ ທີ່ຖືກຈັບໃນປີ 1999 ໃນຂໍ້ຫາພະຍາຍາມຈັດການຊຸມນຸມປະທ້ວງເພື່ອປະຊາທິປະໄຕ, ທັງສອງ ຍັງຄົງສືບຕໍ່ຖືກຈຳຄຸກເປັນເວລາ 15 ປີ ໂດຍຖືກຕັດສິນໃນຄະດີຕໍ່ຕ້ານລັດຖະບານ.

ທ້າວ ມ້ວ ແລະ ປາພີຄັງ ເປັນຄົນເຜົ່າມົ້ງ ທີ່ຖືກຈັບໃນປີ 2003 ໃນຄະດີ ໃຫ້ບໍລິການໃນຖານະທີ່ເປັນຜູ້ນຳທ່ຽວແກ່ນັກຂ່າວຕ່າງຊາດຈຳນວນສາມຄົນ. ທັງສອງຄົນ ຍັງຄົງສືບຕໍ່ຖືກຈຳຄຸກ ເປັນເວລາ 12 ປີ ແລະ 20 ປີ ຕາມລຳດັບ ໃນຂໍ້ຫາຂັດຂວາງຂະບວນການຍຸຕິທຳ ແລະ ມີອາວຸດໃນຄອບຄອງ. ພ້ອມດຽວກັນນັ້ນ, ເຈົ້າໜ້າທີ່ຍັງໄດ້ຈັບກຸມພວກນັກຂ່າວ ແລະ ເນລະເທດພວກເຂົາ ໃນຂໍ້ຫາພະຍາຍາມຫາຂໍ້ມູນກ່ຽວກັບກຸ່ມຄົນເຜົ່າມົ້ງທີ່ກໍ່ຄວາມບໍ່ສະຫງົບ.

ເຈົ້າໜ້າທີ່ອະນຸຍາດໃຫ້ສະມາຊິກຄອບຄົວ ເຂົ້າຢ້ຽມນັກໂທດຄະດີການເມືອງເຫຼົ່ານີ້, ແຕ່ບໍ່ມີອົງການດ້ານມະນຸດສະທຳໃດ ໄດ້ເຂົ້າເຖິງພວກເຂົາຢ່າງເປັນປົກກະຕິ.

ເປັນເວລາຫຼາຍປີແລ້ວ ທີ່ບໍ່ມີຂໍ້ມູນຈາກລັດຖະບານ ຫຼື ຂໍ້ມູນຈາກແຫຼ່ງອື່ນໆ ກ່ຽວກັບຄວາມຄືບໜ້າ ໃນກໍລະນີຄະດີຂອງ ພັນເອກ ສິງ ຈັນທະກຸມມານ, ເຈົ້າໜ້າທີ່ລັດຖະບານ ກ່ອນປີ 1975 ຜູ້ເຊິ່ງຖືກຕັດສິນຈຳຄຸກຕະຫຼອດຊີວິດ ໃນປີ 1990 ໃນຂໍ້ຫາເຄື່ອນໄຫວຕໍ່ຕ້ານລັດຖະບານ.

ຂັ້ນຕອນ ແລະ ວິທີການແກ້ໄຂຄະດີທາງແພ່ງ

ກົດໝາຍກຳນົດໃຫ້ຄະນະຕຸລາການມີອິສະຫຼະ ໃນການດຳເນີນການກ່ຽວກັບຄະດີທາງແພ່ງ, ແຕ່ການບັງຄັບໃຊ້ຄຳສັ່ງສານຍັງຄົງເປັນບັນຫາຢູ່. ບຸກຄົນໃດໜຶ່ງອາດຈະຊອກຫາວິທີການແກ້ໄຂທາງແພ່ງ ສຳລັບການລະເມີດສິດທາງແພ່ງ ຫຼື ສິດທິທາງການເມືອງໃນສານອາຍາ ຫຼື ຮ້ອງຂໍຄວາມຊ່ວຍເຫຼືອຈາກສະພາແຫ່ງຊາດ. ບຸກຄົນ ອາດຈະຊອກຫາວິທີການແກ້ໄຂ ຕໍ່ກັບການລ່ວງລະເມີດສິດທິທາງສັງຄົມ ແລະ ວັດທະນະທຳໃນສານແພ່ງ.

ສ. ການເຂົ້າແຊກແຊງໂດຍພະລະການ ຕໍ່ກັບຄວາມເປັນສ່ວນຕົວ, ຄອບຄົວ, ທີ່ພັກອາໄສ ຫຼື

ການຕິດຕໍ່ສື່ສານທາງຈົດໝາຍ

ໂດຍທົ່ວໄປແລ້ວ, ກົດໝາຍໃຫ້ການປົກປ້ອງສິດໃນຄວາມເປັນສ່ວນຕົວ ລວມທັງສິດໃນການສື່ສານທາງຈົດໝາຍ, ໂທລະສັບ ແລະ ການຕິດຕໍ່ສື່ສານທາງອີເລັກໂຕຣນິກ, ແຕ່ກໍ່ມີການລາຍງານວ່າ ລັດຖະບານຍັງຄົງສືບຕໍ່ແຊກແຊງການປົກປ້ອງສິດທິທີ່ຖືກຕ້ອງທາງດ້ານນີ້ຢູ່ ເມື່ອຮັບຮູ້ວ່າ ມີໄພຄຸກຄາມຕໍ່ຄວາມໝັ້ນຄົງ.

ກົດໝາຍຫ້າມການຄົ້ນຫາ ແລະ ອາຍັດຊັບແບບບໍ່ຖືກຕ້ອງ. ໃນຂະນະທີ່ກົດໝາຍກຳນົດວ່າ ເຈົ້າໜ້າທີ່ຕຳຫຼວດຕ້ອງມີໃບອະນຸຍາດຈາກໄອຍະການ ຫຼື ຄະນະຕຸລາການ, ແຕ່ປົກກະຕິແລ້ວ ຕຳຫຼວດບໍ່ໄດ້ມີໃບອະນຸຍາດດັ່ງກ່າວກ່ອນ, ເປັນຕົ້ນແມ່ນຢູ່ໃນເຂດຊົນນະບົດ. ກົດໝາຍດ້ານຄວາມໝັ້ນຄົງອະນຸຍາດໃຫ້ລັດຖະບານສາມາດຕິດຕາມການເຄື່ອນໄຫວ ແລະ ການຕິດຕໍ່ສື່ສານສ່ວນຕົວຂອງບຸກຄົນ, ລວມທັງການຕິດຕໍ່ສື່ສານຜ່ານທາງໂທລະສັບມືຖື ແລະ ອີເມວລ์.

ກະຊວງປ້ອງກັນຄວາມສະຫງົບ ດຳເນີນການຕິດຕາມການເຄື່ອນໄຫວຂອງພົນລະເມືອງຢ່າງເປັນປົກກະຕິຜ່ານເຄືອຂ່າຍເຝົ້າລະວັງ ທີ່ລວມມີໜ່ວຍງານຕຳຫຼວດລັບ. ໜ່ວຍງານກອງຫຼອນໃນເຂດຕົວເມືອງ ແລະ ເຂດຊົນນະບົດ ທີ່ປະຕິບັດໜ້າທີ່ພາຍໃຕ້ການສະໜັບສະໜູນຂອງກອງກຳລັງປະກອບອາວຸດ, ມີຄວາມຮັບຜິດຊອບຮ່ວມກັນ ໃນການຮັກສາຄວາມເປັນລະບຽບຮຽບร้อยຂອງສັງຄົມ ແລະ ສົ່ງລາຍງານກ່ຽວກັບ "ເຫດການທີ່ບໍ່ເພິ່ງປາດຖະໜາ" ໃຫ້ແກ່ຕຳຫຼວດ. ໜ່ວຍງານແຖວໜ້າອົງການຈັດຕັ້ງຂອງ ພປປລ ລວມມີອົງການສະຫະພັນແມ່ຍິງລາວ, ອົງການຈັດຕັ້ງຊາວໜຸ່ມລາວ, ແລະ ສູນກາງແນວລາວສ້າງຊາດ ຍັງເຮັດບົດບາດໃນການຕິດຕາມການເຄື່ອນໄຫວຂອງພົນລະເຮືອນໃນທຸກລະດັບຂອງສັງຄົມ.

ລັດຖະບານຍັງຄົງສືບຕໍ່ ດຳເນີນການຍົກຍ້າຍຊາວບ້ານຈຳນວນໜຶ່ງ ເພື່ອຮອງຮັບການສຳປະທານທີ່ດິນໃຫ້ແກ່ ໂຄງການພັດທະນາຕ່າງໆ ແລະ ສືບຕໍ່ຍົກຍ້າຍຜູ້ເຮັດໄຮ່ໃນເຂດພື້ນທີ່ສູງ ເຊິ່ງສ່ວນໃຫຍ່ເປັນຄົນຊົນເຜົ່າສ່ວນນ້ອຍ ເພື່ອໃຫ້ມາຢູ່ເຂດທົ່ງພຽງ ໂດຍພາຍໃຕ້ແຜນລົບລ້ຽງການປູກຝິ່ນ ແລະ ການຖາງປ່າເຮັດໄຮ່. ໃນຂະນະທີ່ບໍ່ມີການລາຍງານວ່າ ເຈົ້າໜ້າທີ່ລັດດຳເນີນການບັງຄັບຊາວບ້ານໃນການຍົກຍ້າຍ, ແຕ່ກໍ່ມີການລາຍງານວ່າ ມີບາງບຸກຄົນໄດ້ຮັບກະທົບດ້ານທີ່ພັກອາໄສ ອັນເນື່ອງມາຈາກໂຄງການຂອງລັດຖະບານ. ເຖິງແມ່ນວ່າ ແຜນການຍົກຍ້າຍຖິ່ນຖານຮຽກຮ້ອງໃຫ້ມີການທົດແທນ ແກ່ຊາວກະສິກອນທີ່ໄດ້ສູນເສຍເນື້ອທີ່ທຳການຜະລິດ ແລະ ໃຫ້ຄວາມຊ່ວຍເຫຼືອການຍົກຍ້າຍຖິ່ນຖານ, ແຕ່ການຊ່ວຍເຫຼືອ ກໍ່ບໍ່ພຽງພໍໃນຫຼາຍກໍລະນີ ຫຼື ຊາວບ້ານທີ່ຖືກຍົກຍ້າຍ ຍັງບໍ່ໄດ້ຮັບການຊ່ວຍເຫຼືອທີ່ພຽງພໍ ເພື່ອການປັບຕົວເຂົ້າກັບສະພາບໃໝ່. ຍິ່ງໄປກວ່ານັ້ນ, ພື້ນທີ່ທຳການຜະລິດບາງບ່ອນ ທີ່ຖືກຈັດສັນໃຫ້ຊາວບ້ານ ແມ່ນເປັນພື້ນທີ່ບໍ່ດີ ແລະ ບໍ່ເໝາະສົມຕໍ່ການປູກເຂົ້າ. ລັດຖະບານໄດ້ອີງໃສ່ການຊ່ວຍເຫຼືອຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ຜູ້ໃຫ້ທຶນຊ່ວຍເຫຼືອແບບສອງຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຕອບສະໜອງຄວາມຕ້ອງການອັນຈຳເປັນ ໃຫ້ແກ່ການຕັ້ງຖິ່ນຖານໃໝ່ເຫຼົ່ານີ້, ແຕ່ການຊ່ວຍເຫຼືອດັ່ງກ່າວ ກໍ່ຍັງບໍ່ທົ່ວເຖິງທຸກພື້ນທີ່.

ໃນວັນທີ 18 ເດືອນມີຖຸນາ, ເຈົ້າໜ້າທີ່ທ້ອງຖິ່ນ ໄດ້ກັກຕົວຊາວນາຈຳນວນເຈັດຄົນ ຈາກບ້ານຢຽບ, ເມືອງທ່າແຕງ, ແຂວງເຊກອງ ໃນລະຫ່ວາງການໂຕ້ຖຽງກ່ຽວກັບຄ່າຕອບແທນ ສຳລັບດິນ ທີ່ມອບໃຫ້ບໍລິສັດປູກຢາງພາລາຂອງຫວຽດນາມ ໂດຍຜ່ານການສຳປະທານຂອງລັດຖະບານ. ພວກຊາວນາໄດ້ຈັດຕັ້ງ ແລະ ສົ່ງຄຳຮ້ອງໄປຍັງລັດຖະບານແຫ່ງຊາດ ແລະ ລັດຖະສະພາ ເພື່ອຂໍຄວາມຊ່ວຍເຫຼືອໃນການໄກ່ເກ່ຍຂໍ້ຂັດແຍ່ງ. ເຈົ້າໜ້າທີ່ທ້ອງຖິ່ນ ໄດ້ດຳເນີນການຈັບກຸມພວກຊາວນາດັ່ງກ່າວພາຍໃນເຮືອນ ແຕ່ກໍ່ໄດ້ປ່ອຍຕົວພວກເຂົາໃນທ້າຍເດືອນມີຖຸນາ. ອີງຕາມຂໍ້ມູນຈາກລັດຖະບານ, ພວກຊາວນາ ແລະ ບໍລິສັດທີ່ກ່ຽວຂ້ອງ ໄດ້ແກ້ໄຂຂໍ້ຂັດແຍ່ງຂອງພວກເຂົາແລ້ວ ຫຼັງຈາກທີ່ລັດຖະບານໄດ້ເຂົ້າໄປແຊກແຊງ, ແລະ ທາງບໍລິສັດ ກໍ່ໄດ້ສະໜອງດິນຕອນໃໝ່ໃຫ້ພວກຊາວນາ ເພື່ອເປັນການຊົດເຊີຍ ແລະ ກໍ່ໄດ້ໃຫ້ໂອກາດແກ່ພວກເຂົາ ເຮັດວຽກງານດ້ານການປູກຝັງ.

ກົດໝາຍອະນຸຍາດໃຫ້ພົນລະເມືອງສາມາດແຕ່ງງານກັບຄົນຕ່າງຊາດໄດ້ ໃນກໍລະນີທີ່ໄດ້ຮັບອະນຸຍາດຈາກລັດຖະບານກ່ອນເທົ່ານັ້ນ; ການແຕ່ງງານໂດຍບໍ່ໄດ້ຮັບອະນຸຍາດ ຈະຖືວ່າເປັນໂມຄະ ແລະ ທັງສອງຝ່າຍຈະຖືກຈັບກຸມ ແລະ ປັບໄໝ. ການຢູ່ຮ່ວມກັນຖານຜົວເມຍກັບຄົນຕ່າງຊາດໂດຍບໍ່ໄດ້ແຕ່ງງານ ຖືວ່າເປັນເລື່ອງຜິດກົດໝາຍ. ຕາມປົກກະຕິ ລັດຖະບານຈະອະນຸຍາດໃຫ້ແຕ່ງງານ, ແຕ່ຂັ້ນຕອນ ແລະ ຂະບວນການແມ່ນໃຊ້ເວລາ ແລະ ມີຄວາມຊັບຊ້ອນ ເຊິ່ງເປັນການສ້າງເງື່ອນໄຂໃຫ້ເຈົ້າໜ້າທີ່ສວຍໂອກາດໃນການຮຽກຮ້ອງສິນບົນ.

ພາກທີ 2. ການເຄົາລົບຕໍ່ສິດເສລີພາບຂອງພົນລະເມືອງ, ລວມມີ:

ກ. ສິດເສລີພາບໃນການປາກເວົ້າ ແລະ ສື່ມວນຊົນ

ກົດໝາຍກຳນົດສິດເສລີພາບຂອງພົນລະເມືອງໃນການປາກເວົ້າ ແລະ ການນຳໃຊ້ສື່ສານມວນຊົນ, ແຕ່ລັດຖະບານ ຈຳກັດຢ່າງເຂັ້ມງວດໃນການປາກເວົ້າ ແລະ ຂີດຂຽນກ່ຽວກັບການເມືອງ ແລະ ຍັງຫ້າມການຕຳນິວິຈານຂອງສັງຄົມ ເຊິ່ງຖືວ່າມັນເປັນການທຳລາຍຕໍ່ຊື່ສຽງຂອງຕົນ.

<u>ສິດເສລີພາບໃນການປາກເວົ້າ:</u> ກົດໝາຍອະນຸຍາດໃຫ້ພົນລະເມືອງມີສິດໃນການຕຳນິລັດຖະບານ ແຕ່ກໍ່ຫ້າມ ການໃສ່ຮ້າຍປ້າຍສີຕໍ່ພາກລັດ, ສ້າງເລື່ອງບິດເບືອນຕໍ່ນະໂຍບາຍຂອງພັກ ຫຼື ລັດຖະບານ, ຍຸແຍ່ການສ້າງຄວາມບໍ່ເປັນລະບຽບ, ຫຼື ການໂຄສະນາຂໍ້ມູນ ຫຼື ແນວຄວາມຄິດເພື່ອບັນທອນລັດຖະບານ.

<u>ສິດທິທາງສື່ມວນຊົນ:</u> ລັດຖະບານເປັນເຈົ້າຂອງ ແລະ ຄຸ້ມຄອງສຳນັກພິມ ແລະ ລະບົບສື່ສານມວນຊົນທາງອີເລັກໂຕຣນິກ ພາຍໃນປະເທດທັງໝົດ. ຂ່າວທ້ອງຖິ່ນໃນສື່ມວນຊົນທັງໝົດສະທ້ອນໃຫ້ເຫັນນະໂຍບາຍຂອງລັດຖະບານ. ລັດຖະບານ ໄດ້ອະນຸຍາດການພິມເຜີຍແຜ່ວາລະສານຂອງເອກະຊົນທີ່ບໍ່ມີເນື້ອຫາທາງການເມືອງ, ລວມມີບັນດາວາລະສານທີ່ນຳສະເໜີດ້ານເສດຖະກິດ, ສັງຄົມ ແລະ ການຄ້າ. ໜັງສືພິມ ແລະ ວາລະສານຂອງຕ່າງປະເທດສອງ-ສາມສະບັບ ມີຂາຍຢູ່ຕາມຮ້ານຄ້າເອກະຊົນທົ່ວໄປ ຊຶ່ງໄດ້ຮັບການອະນຸຍາດຂອງ

ລັດຖະບານໃຫ້ຂາຍໄດ້.

ເຖິງແມ່ນວ່າ ການກະຈາຍຂ່າວທາງໂທລະພາບ ແລະ ວິທະຍຸພາຍໃນ ຈະຖືກຄວບຄຸມຢ່າງໃກ້ຊິດໂດຍລັດຖະບານ, ແຕ່ລັດຖະບານ ກໍ່ບໍ່ໄດ້ແຊກແຊງການກະຈາຍຂ່າວຈາກຕ່າງປະເທດ. ພົນລະເມືອງສາມາດຮັບຮູ້ສະຖານະການໂລກ ຜ່ານໂທລະພາບລະບົບດາວທຽມ ແລະ ສາຍເຄເບີນໄດ້ຕະຫຼອດ 24 ຊົ່ວໂມງ. ລັດຖະບານ ກຳນົດໃຫ້ພົນລະເມືອງ ລົງທະບຽນສຳລັບ ເຄື່ອງຮັບສັນຍານໂທລະພາບຜ່ານດາວທຽມ ແລະ ຈ່າຍຄ່າທຳນຽມແບບຄັ້ງດຽວ, ສ່ວນໃຫຍ່ກໍ່ເປັນມາດຕະການ ການສ້າງລາຍຮັບ, ແຕ່ກໍ່ບໍ່ໄດ້ມີຄວາມພະຍາຍາມ ໃນການຂັດຂວາງການນຳໃຊ້ແຕ່ຢ່າງໃດ.

ໃນວັນທີ 27 ເດືອນມັງກອນ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຍົກເລີກລາຍການວິທະຍຸ ລາຍການໜຶ່ງ ເຊິ່ງເປັນລາຍການທີ່ໄດ້ຮັບຄວາມນິຍົມ ແລະ ກໍ່ອອກອາກາດມາດົນແລ້ວ ແລະ ເປັນລາຍການທີ່ມັກ ນຳສະເໜີແນວຄວາມຄິດທີ່ມີການໂຕ້ແຍ້ງ, ເປັນລາຍການທີ່ເປີດການສົນທະນາ ແລະ ສະແດງຄວາມຄິດເຫັນກ່ຽວກັບເຫດການທີ່ເກີດຂຶ້ນໃນປະຈຸບັນ ແລະ ເປີດໂອກາດໃຫ້ຜູ້ຟັງສະເໜີຂໍ້ຮ້ອງຮຽນໂດຍບໍ່ຕ້ອງອອກນາມ. ເນື່ອງຈາກວ່າ ມີສຽງຕໍ່ວ່າຈາກປະຊາຊົນກ່ຽວກັບການຍົກເລີກລາຍການດັ່ງກ່າວ, ໄດ້ມີການເຈລະຈາລະຫວ່າງລັດຖະບານ ແລະ ເຈົ້າຂອງລາຍການຢ່າງຕໍ່ເນື່ອງໃນປີນີ້, ແຕ່ວ່າລາຍການດັ່ງກ່າວ ກໍ່ບໍ່ໄດ້ກັບຄືນມາອອກອາກາດອີກຈົນຮອດທ້າຍປີ. ລັດຖະບານ ຢືນຢັນວ່າ ເຈົ້າຂອງລາຍການບໍ່ຈ່າຍຄ່າທຳນຽມອອກອາກາດປະຈຳເດືອນ ເຊິ່ງເປັນເຫດໃຫ້ມີການຍົກ ເລີກລາຍການດັ່ງກ່າວ.

<u>ຄວາມຮຸນແຮງ ແລະ ການກໍ່ກວນຄຸກຄາມ:</u> ລັດຖະບານ ກຳນົດໃຫ້ນັກຂ່າວຕ່າງປະເທດ ສະເໜີຂໍວີຊ້າ (visa) ແບບພິເສດ ແລະ ຈຳກັດການເຄື່ອນໄຫວຂອງເຂົາເຈົ້າ. ທາງການ ຍັງຄົງສືບຕໍ່ປະຕິເສດບໍ່ໃຫ້ນັກຂ່າວຕ່າງປະເທດ ເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານຢ່າງອິສະຫຼະ ແຕ່ກໍ່ອະນຸຍາດການເດີນທາງຂອງເຂົາເຈົ້າເລື້ອຍໆ ໂດຍປາສະຈາກການ ຕິດຕາມຢ່າງເປັນທາງການ. ໃນກໍລະນີ ທີ່ຕ້ອງມີການຕິດຕາມຂອງເຈົ້າໜ້າທີ່, ລາຍງານແຈ້ງໃຫ້ຊາບວ່າ ຄ່າໃຊ້ ຈ່າຍ ແມ່ນເປັນຄວາມຮັບຜິດຊອບຂອງນັກຂ່າວ.

<u>ການກວດກາ ຫຼື ການຈຳກັດເນື້ອຫາ:</u> ເຈົ້າໜ້າທີ່ ຈະທຳການນກວດສອບຄືນເນື້ອ ຫາຂອງທຸກໆບົດຄວາມທີ່ພິມລົງໃນວາລະສານຂອງເອກະຊົນ ຫຼັງຈາກທີ່ໄດ້ມີການຈັດພິມໄປແລ້ວ (ບໍ່ແມ່ນກວດກ່ອນການພິມ), ແລະ ສາມາດປັບໄໝລົງໂທດ ຕໍ່ບົດຄວາມທີ່ບໍ່ຕົງກັບການອະນຸມັດຂອງທາງການ. ກົມສື່ສານມວນຊົນຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢືນຢັນວ່າ ໃນປີນີ້ ບໍ່ມີບົດພິມໃດທີ່ບໍ່ໄດ້ຮັບການອະນຸມັດຈາກລັດຖະບານ. ເຖິງແນວໃດກໍ່ຕາມ, ມີລາຍງານວ່າ ສຳນັກພິມຕ່າງໆ ຮູ້ວ່າເນື້ອຫາໃດທີ່ລັດຖະບານຈະອະນຸມັດໃຫ້ຈັດພິມ, ສະນັ້ນ ສຳນັກພິມຈຶ່ງສືບຕໍ່ດຳເນີນການກວດກາເນື້ອຫາດ້ວຍຕົນເອງ.

ເຈົ້າໜ້າທີ່ ໄດ້ຫ້າມການເຜີຍແຜ່ເອກະສານຕ່າງໆ ທີ່ທາງກະຊວງເຫັນວ່າ ບໍ່ເໝະສົມ, ຈະສ້າງຄວາມເສື່ອມເສຍຕໍ່ "ວັດທະນະທຳຂອງຊາດ", ຫຼື ມີຄວາມລະອຽດອ່ອນທາງການເມືອງ. ໃນກໍລະນີທີ່ພົບວ່າ ມີບຸກຄົນໃດກະທຳຄວາມຜິດໃນການນຳເຂົ້າສື່ ທີ່ເຫັນວ່າ ມີລັກສະນະກໍ່ຄວາມເສື່ອມເສຍ ໃຫ້ແກ່ວັດທະນະທຳຂອງຊາດ ແມ່ນຈະຖືກປັບໄໝ ຕັ້ງແຕ່ໜຶ່ງຫາສາມທຶບຂອງມູນຄ່າສື່ດັ່ງກ່າວ ຫຼື ຈະຖືກຕັດອິສະຫຼະພາບເປັນເວລາໜຶ່ງປີ.

ສິດເສລີພາບໃນການນຳໃຊ້ອິນເຕີເນັດ

ລັດຖະບານຄຸ້ມຄອງການບໍລິການທາງອິນເຕີເນັດພາຍໃນປະເທດທັງໝົດ ແລະ ດຳເນີນການຕິດຕາມກວດສອບການນຳໃຊ້ອິນເຕີເນັດເປັນແຕ່ລະໄລຍະ, ແຕ່ປະກົດວ່າ ບໍ່ມີຄວາມສາມາດທີ່ຈະກີດກັ້ນການເຂົ້າເຖິງເວັບໄຊຕ່າງໆໄດ້. ໃນປີນີ້, ເຈົ້າໜ້າທີ່ໄດ້ພັດທະນາໂຄງລ່າງ ເພື່ອເຮັດໃຫ້ການຈະລາຈອນຂອງລະບົບອິນເຕີເນັດທັງໝົດຜ່ານປະຕູດຽວ ເຊິ່ງຈະເຮັດໃຫ້ເຈົ້າໜ້າທີ່ສາມາດກວດກາ ແລະ ຈຳກັດເນື້ອຫາໄດ້. ແຕ່ເຖິງຢ່າງໃດກໍ່ຕາມ, ມາຮອດທ້າຍປີ ກໍ່ຍັງບໍ່ທັນໄດ້ມີການນຳໃຊ້ຄວາມສາມາດທີ່ເພີ່ມຂຶ້ນດັ່ງກ່າວ. ຄະນະກຳມະການຄຸ້ມຄອງການນຳໃຊ້ອິນເຕີເນັດແຫ່ງຊາດ ໂດຍພາຍໃຕ້ການຊີ້ນຳຂອງສຳນັກງານນາຍົກລັດຖະມົນຕີ ເປັນຜູ້ບໍລິຫານຄຸ້ມຄອງລະບົບອິນເຕີເນັດ. ຄະນະກຳມະການດັ່ງກ່າວ ໄດ້ກຳນົດໃຫ້ຜູ້ສະໜອງການບໍລິການດ້ານອິນເຕີເນັດ ຕ້ອງສົ່ງບົດລາຍງານປະຈຳໄຕມາດ ແລະ ເຊື່ອມຕໍ່ກັບລະບົບຈະລາຈອນອິນເຕີເນັດຂອງພວກເຂົາ ເພື່ອຄວາມສະດວກໃນການກວດກາ, ແຕ່ຄວາມສາມາດໃນການບັງຄັບໃຊ້ ຂອງລັດຖະບານຍັງຄົງຈຳກັດຢູ່.

ການເຂົ້າເຖິງການນຳໃຊ້ອິນເຕີເນັດ ຍັງບໍ່ທັນສາມາດຕອບສະໜອງການນຳໃຊ້ໄດ້ຢ່າງກ້ວາງຂວາງເທື່ອ; ໃນເດືອນສິງຫາ ລັດຖະບານປະເມີນວ່າ ມີ 8 ສ່ວນຮ້ອຍ ຂອງປະຊາກອນທັງໝົດ ໄດ້ນຳໃຊ້ອິນເຕີເນັດ.

ສິດເສລີພາບທາງວິຊາການ ແລະ ການຈັດງານທາງວັດທະນະທຳ

ກົດໝາຍກຳນົດສິດເສລີພາບທາງວິຊາການ, ແຕ່ລັດຖະບານໄດ້ວາງຂໍ້ຈຳກັດຕ່າງໆ. ກະຊວງສຶກສາ ໄດ້ມີການຄຸ້ມຄອງຢ່າງໃກ້ຊິດ ຕໍ່ຫຼັກສູດໃນໂຮງຮຽນ, ລວມທັງໂຮງຮຽນເອກະຊົນ ແລະ ວິທະຍາໄລຕ່າງໆ.

ນັກວິຊາການມືອາຊີບທີ່ເປັນພົນລະເມືອງທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຶກສາວິໄຈຢູ່ພາຍໃນປະເທດ ອາດຈະພົບກັບບັນຫາຂໍ້ຈຳກັດໃນການເດີນທາງ, ເຂົ້າເຖິງແຫຼ່ງຂໍ້ມູນ ແລະ ສື່ງພິມຕ່າງໆ. ເຖິງແມ່ນວ່າ ລັດຖະບານໄດ້ດຳເນີນການຄຸ້ມຄອງ ໂດຍຮຽກຮ້ອງໃຫ້ມີການປະທັບອະນຸຍາດເດີນທາງອອກນອກປະເທດ ແລະ ກົນໄກອື່ນໆ ທີເປັນຜົນກະທົບຕໍ່ຄວາມອາດສາມາດຂອງພະນັກງານວິຊາການມືອາຊີບຂອງພາກລັດ ເພື່ອເດີນທາງໄປເຮັດການສຶກສາວິໄຈ ຫຼື ຮັບເອົາທຶນການສຶກສາ, ລັດຖະບານ ໄດ້ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າຕໍ່ວຽກງານການສຶກສາວິໄຈ ແລະ ໂອກາດທາງການສຶກສາຢ່າງກ້ວາງຂວາງ ແລະ ກໍ່ໄດ້ອະນຸມັດການສະເໜີຂໍ ດັ່ງກ່າວເກືອບທັງໝົດ.

ລັດຖະບານ ໄດ້ຮຽກຮ້ອງໃຫ້ ການບັນທຶກຟິມຮູບເງົາ ແລະ ບົດເພັງຕ່າງໆ ຜະລິດຢູ່ໃນສະຖານີຂອງລັດ ຕ້ອງຖືກສົ່ງໄປກວດສອບຢ່າງເປັນທາງການ; ແຕ່ເຖິງຢ່າງໃດກໍ່ຕາມ, ຍັງຄົງມີຮູບເງົາ ແລະ ບົດເພັງຂອງຕ່າງປະເທດ ທີ່ບໍ່ໄດ້ຮັບການກວດສອບ ຖືກຈຳໜ່າຍທົ່ວໄປ ໃນຮູບແບບຂອງ ວີດີໂອ ແລະ ແຜ່ນຊີດີຕ່າງໆ. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ພະຍາຍາມຈຳກັດ ອິດທິພົນຂອງວັດທະນາທຳໄທ ຕໍ່ເພັງ ແລະ ວົງການບັນເທີງຂອງລາວ, ແຕ່ຄວາມພະຍາຍາມດັ່ງກ່າວ ມີຜົນພຽງເລັກນ້ອຍເທົ່ານັ້ນ.

ຂ. ເສລີພາບໃນການຊຸມນຸມຢ່າງສະຫງົບ ແລະ ການຈັດຕັ້ງສະມາຄົມ

ສິດເສລີພາບໃນການຊຸມນຸມ

ກົດໝາຍກຳນົດສິດເສລີພາບ ໃນການຊຸມນຸມ; ແຕ່ເຖິງຢ່າງໃດກໍ່ຕາມ, ລັດຖະບານ ຍັງຄົງສືບຕໍ່ຈຳກັດສິດທິທາງດ້ານນີ້. ກົດໝາຍຫ້າມການເຂົ້າຮ່ວມຊຸມນຸມເພື່ອປະທ້ວງ, ການເດີນຂະບວນຕໍ່ຕ້ານ ຫຼື ການກະທຳໃດໆທີ່ ສ້າງ "ຄວາມວຸ້ນວາຍ ຫຼື ຄວາມບໍ່ມີສະເຖຍລະພາບທາງສັງຄົມ". ການເຂົ້າຮ່ວມການເຄື່ອນໄຫວດັ່ງກ່າວ ແມ່ນຈະຖືກລົງໂທດ ໂດຍການຕັດອິສະຫຼະພາບ ແຕ່ ໜຶ່ງ ຫາ ຫ້າປີ (ເບິ່ງພາກທີ 1.ຈ.).

ສິດເສລີພາບໃນການຈັດຕັ້ງສະມາຄົມ

ກົດໝາຍກຳນົດສິດຂອງພົນລະເມືອງໃນການຈັດຕັ້ງ ແລະ ເຂົ້າຮ່ວມສະມາຄົມຕ່າງໆ, ແຕ່ລັດຖະບານຍັງຄົງສືບຕໍ່ຈຳກັດສິດດັ່ງກ່າວ. ຕົວຢ່າງ: ການຈັດຕັ້ງກຸ່ມການເມືອງອື່ນໆ ນອກເໜືອຈາກອົງການຈັດຕັ້ງແຖວໜ້າ ທີ່ໄດ້ຮັບອະນຸຍາດຈາກ ພປປລ ແມ່ນຍັງຖືກຫ້າມຢູ່. ຍິ່ງໄປກວ່ານັ້ນ, ບາງຄັ້ງຄາວ ລັດຖະບານພະຍາຍາມສ້າງອິດທິພົນຕໍ່ການເປັນສະມາຊິກ ຂອງຄະນະກຳມະການ ອົງການຈັດຕັ້ງສັງຄົມພົນລະເຮືອນ ແລະ ບັງຄັບໃຫ້ບາງອົງການຈັດຕັ້ງ ປ່ຽນຊື່ ດ້ວຍການຕັດບາງຄຳສັບອອກ ເຊັ່ນຄຳວ່າ "ສິດທິ" ທີ່ພິຈາລະນາເຫັນວ່າເປັນເລື່ອງລະອຽດອ່ອນ.

ອີງຕາມດຳລັດ ລັດຖະບານອະນຸຍາດ ການຂໍຂຶ້ນທະບຽນ ຂອງອົງການຈັດຕັ້ງສັງຄົມພົນລະເຮືອນທີ່ບໍ່ຫວັງຜົນກຳໄລ, ລວມມີ ສະມາຄົມທາງເສດຖະກິດ, ສັງຄົມສົງເຄາະ, ວິຊາຊີບ, ວິຊາການ ແລະ ສະມາຄົມສ້າງສັນຕ່າງໆ ໃນລະດັບຂັ້ນເມືອງ, ແຂວງ, ຫຼື ລະດັບປະເທດ ໂດຍທັງໝົດຕ້ອງຂຶ້ນກັບຂອບເຂດໜ້າວຽກ ແລະ ຈຳນວນສະມາຊິກ. ເຖິງແມ່ນວ່າ ອັດຕາສ່ວນຂອງການອະນຸມັດ ໄດ້ມີການປັບປຸງໃນປີນີ້, ແຕ່ຂັ້ນຕອນການຂຶ້ນທະບຽນ ຍັງຄົງຊັກຊ້າຢູ່. ມາຮອດທ້າຍປີ, ມີ 32 ສະມາຄົມລະດັບຊາດ ທີ່ໄດ້ຮັບການຂຶ້ນທະບຽນຢ່າງຄົບຖ້ວນ, ມີ 17 ສະມາຄົມ ທີ່ກຳລັງຢູ່ໃນຮູບແບບການຂຶ້ນທະບຽນຊົ່ວຄາວ, ແລະ 52 ສະມາຄົມ ຍັງຄົງຢູ່ໃນໄລຍະລໍຖ້າ, ໃນຂະນະທີ່ 70 ສະມາຄົມ ໄດ້ຂຶ້ນທະບຽນໃນຂັ້ນແຂວງ.

ຄ. ເສລີພາບທາງສາດສະໜາ

ເບິ່ງລາຍງານຂອງກະຊວງການຕ່າງປະເທດສະຫະລັດອາເມຣິກາກ່ຽວກັບ *ເສລີພາບທາງສາດສະໜາສາກົນ* ທີ່ເວັບໄຊ www.state.gov/j/drl/irf/rpt.

ງ. ສິດເສລີພາບໃນການເຄື່ອນໄຫວ, ຄົນພັດຖິ່ນພາຍໃນ, ການປົກປ້ອງຜູ້ລີ້ໄພ ແລະ ບຸກຄົນບໍ່ມີສັນຊາດ

ກົດໝາຍກຳນົດສິດເສລີພາບໃນການເຄື່ອນໄຫວໄປມາພາຍໃນປະເທດ, ເດີນທາງໄປຕ່າງປະເທດ, ການຍ້າຍຖິ່ນຖານ ແລະ ການສົ່ງຕົວກັບຄືນ, ແຕ່ໃນພາກປະຕິບັດ ລັດຖະບານໄດ້ວາງຂໍ້ຈຳກັດບາງຢ່າງ. ລັດຖະບານໄດ້ມີການຮ່ວມມືກັບຫ້ອງການຂ້າຫຼວງໃຫຍ່ຂອງອົງການສະຫະປະຊາຊາດ (UNHCR) ແລະ ອົງການເພື່ອມະນຸດສະທຳອື່ນໆ ໃນບາງກໍລະນີ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ ແກ່ຄົນພັດຖິ່ນພາຍໃນປະເທດ, ຄົນອົບພະຍົບ, ຄົນອົບພະຍົບທີ່ກັບຄືນມາ, ຜູ້ຂໍລີ້ໄພທາງການເມືອງ, ຄົນທີ່ບໍ່ມີສັນຊາດ ແລະ ບຸກຄົນອື່ນໆທີ່ໜ້າເປັນຫ່ວງ.

ການເດີນທາງໄປຕ່າງປະເທດ: ພົນລະເມືອງຜູ້ທີ່ມີຈຸດປະສົງເດີນທາງໄປໃນເຂດພື້ນທີ່ ທີ່ຕິດກັບປະເທດເພື່ອນບ້ານ, ຕາມປົກກະຕິ ແມ່ນໄດ້ຮັບການອະນຸຍາດໄປຢ່າງສະດວກ ຈາກເຈົ້າໜ້າທີ່ຂັ້ນເມືອງ. ແຕ່ຜູ້ທີ່ມີຈຸດປະສົງຈະເດີນທາງໄປຕ່າງປະເທດທີ່ໄກກວ່ານັ້ນ ຕ້ອງຂໍໜັງສືເດີນທາງ (ປັດສປໍ).

ການຍ້າຍຖິ່ນຖານ ແລະ ການສົ່ງຕົວກັບຄືນ: ລັດຖະບານຍັງຄົງສືບຕໍ່ ປະຕິເສດການສະເໜີ ຂອງອົງການຂ້າຫຼວງໃຫຍ່ສະຫະປະຊາຊາດ ໃນການສ້າງຕັ້ງຫ້ອງການຕົວແທນພາຍໃນປະເທດຄືນອີກ, ເຊິ່ງຫ້ອງການດັ່ງກ່າວເຄີຍມີໃນຊຸມປີ 1990, ເພື່ອຕິດຕາມສະຖານະການຂອງຊາວມົ້ງອົບພະຍົບທີ່ກັບຄືນມາຈາກປະເທດໄທ. ເພື່ອທົດແທນຄືນ, ລັດຖະບານໄດ້ຍຶດຖືບົດອາຍັດຂອງຂ້າຫຼວງໃຫຍ່ສະຫະປະຊາຊາດທີ່ໄດ້ໝົດອາຍຸໄປແລ້ວຕັ້ງແຕ່ປີ 2001 ແລະ ອະດີດຜູ້ອົບພະຍົບທັງໝົດກໍ່ໄດ້ກັບຄືນປະເທດຢ່າງສົມບູນ. ໃນປີນີ້, ນັກການທູດຕ່າງປະເທດ, ຕົວແທນຈາກອົງການຈັດຕັ້ງສາກົນ (ລວມມີ ເຈົ້າໜ້າທີ່ອາວຸโสໜຶ່ງທ່ານ ຈາກຫ້ອງການຂ້າຫຼວງໃຫຍ່ສະຫະປະຊາຊາດ), ແລະ ນັກຂ່າວ ໄດ້ໄປຢ້ຽມຢາມບ້ານໂພນຄຳ ທີ່ແຂວງບໍລິຄຳໄຊ ແລະ/ຫຼື ບ້ານຜາຫຼັກ ແລະ ບ້ານໜອງສານ ທີ່ແຂວງວຽງຈັນ ເຊິ່ງເປັນບ່ອນຕັ້ງຖິ່ນຖານໃໝ່ຂອງຊາວມົ້ງອົບພະຍົບທີ່ສະໝັກໃຈ ແລະ ບໍ່ສະໝັກໃຈ ກັບມາຈາກປະເທດໄທ ໃນປີ 2007 – 09. ໃນປີນີ້, ລັດຖະບານໄດ້ສືບຕໍ່ ກໍ່ສ້າງລະບົບຊົນລະປະທານ ໃຫ້ບ້ານໂພນຄຳ (ທີ່ວາງແຜນວ່າຈະສຳເລັດໃນປີ 2013) ແລະ ໄດ້ອະນຸຍາດໃຫ້ ປະຊາຄົມສາກົນ ໄດ້ເຂົ້າໄປເຖິງໝູ່ບ້ານຈັດສັນໃໝ່ດັ່ງກ່າວ ເຖິງແມ່ນວ່າຈະຕ້ອງຢູ່ພາຍໃຕ້ການຕິດຕາມຄວບຄຸມກໍ່ຕາມ.

ນະໂຍບາຍຂອງລັດຖະບານ ບໍ່ວ່າຍາມໃດກໍ່ຕາມທີ່ມີຄວາມເປັນໄປໄດ້ ສຳລັບທັງສອງກຸ່ມຊາວມົ້ງ ທີ່ຍອມອອກມາຢູ່ພາຍໃນປະເທດ ກໍຄືຜູ້ທີ່ກັບຄືນມາຈາກປະເທດໄທ ແມ່ນຈັດສົ່ງພວກເຂົາເຈົ້າກັບຄືນໄປຍັງຊຸມຊົນດັ້ງເດີມຂອງເຂົາເຈົ້າ. ມີລາຍງານວ່າ ໃນປີນີ້ ເຈົ້າໜ້າທີ່ ໄດ້ປ່ອຍຕົວຊາວລາວມົ້ງທີ່ຊື່ວ່າ ຄາຍັງ ອອກຈາກສູນກັກຂັງ, ເຊິ່ງຜູ້ກ່ຽວເປັນຜູ້ລີ້ໄພໃນປະເທດໄທ ທີ່ຮັບຮູ້ໂດຍອົງການຂ້າຫຼວງໃຫຍ່ສະຫະປະຊາຊາດ ແລະ

ຖືກເນລະເທດກັບຄືນປະເທດລາວຢ່າງບໍ່ເປັນທາງການ ໃນເດືອນທັນວາ ປີ 2011.

ລັດຖະບານ ຍັງຄົງຍຶດຖືນະ�โยบายຂອງຕົນ ໃນການປະຕິເສດສິດທິໃນການກັບຄືນຂອງບຸກຄົນທີ່ໜີອອກຈາກປະເທດໃນລະຫ່ວາງປີ 1975 ເຊິ່ງເປັນໄລຍະປ່ຽນແປງລະບອບການປົກຄອງ ແລະ ບຸກຄົນເຫຼົ່ານັ້ນໄດ້ຖືກພິຈາລະນາຕັດສິນ ໂດຍບໍ່ໄດ້ມີໜ້າເຂົ້າຮ່ວມ ວ່າເປັນຜູ້ເຄື່ອນໄຫວຕ້ານລັດຖະບານ, ແຕ່ໃນປີນີ້ ກໍ່ບໍ່ມີການລາຍງານກ່ຽວກັບກໍລະນີປະຕິເສດດັ່ງກ່າວ.

ຄົນພັດຖິ່ນພາຍໃນປະເທດ (IDPs)

ໂດຍຂາດການຕິດຕາມທີ່ເຂົ້າໃຈໄດ້ດີ ແລະ ຕໍ່ເນື່ອງ ໂດຍອົງການຈັດຕັ້ງສາກົນ ແລະ ຜູ້ສັງເກດການອິສະຫຼະ, ຈຶ່ງຍັງຄົງບໍ່ສາມາດລະບຸໄດ້ ຈຳນວນ ແລະ ສະພາບ ຂອງຄົນພັດຖິ່ນທີ່ຢູ່ພາຍໃນປະເທດ ຫຼື ສະຖານະການກ່ຽວກັບການປົກປ້ອງ ແລະ ການປະສານສົມທົບກັນຄືນ, ຂໍ້ຈຳກັດຂອງລັດຖະບານຕໍ່ພວກເຂົາ, ແລະ ການເຂົ້າເຖິງການບໍລິການ ແລະ ການຊ່ວຍເຫຼືອຂັ້ນພື້ນຖານຂອງເຂົາເຈົ້າ. ແນວໃດກໍ່ຕາມ, ບົດລາຍງານປີ 2010 ຂອງສູນຕິດຕາມຄົນພັດຖິ່ນສາກົນ ຂອງອົງການທີ່ບໍ່ສັງກັດລັດ ໄດ້ຈັດແບ່ງຄົນພັດຖິ່ນພາຍໃນປະເທດເປັນສາມກຸ່ມ ເຊິ່ງລວມແລ້ວອາດຈະມີຈຳນວນ "ລະຫว่ວ່ານ ຫຼາຍຮ້ອຍ ແລະ ຫຼາຍພັນ" ດັ່ງນີ້: (1) ຊາວມົ້ງທີ່ໜີໄປປະເທດໄທ ແລະ ຖືກບັງຄັບໃຫ້ກັບຄືນ; (2) ກຸ່ມຄົນທີ່ຖືວ່າເປັນພົນລະເມືອງ ແຕ່ໄປອາໄສຢູ່ນຳກຸ່ມມົ້ງທີ່ກໍ່ຄວາມບໍ່ສະຫງົບ (ເບິ່ງພາກທີ 6); ແລະ (3) ກຸ່ມຄົນຈຳນວນໜ້ອຍ ທີ່ແມ່ນຊົນເຜົ່າສ່ວນນ້ອຍບໍ່ແມ່ນສາດສະໜາພຸດ ເຊິ່ງມີລາຍງານວ່າພວກກ່ຽວໄດ້ຖືກບັງຄັບໃຫ້ອອກຈາກໝູ່ບ້ານຂອງພວກເຂົາ ເນື່ອງຈາກຂໍ້ຈຳກັດຂອງທ້ອງຖິ່ນ ກ່ຽວກັບການເຄື່ອນໄຫວທາງສາດສະໜາ. (ເບິ່ງການລາຍງານຂອງກະຊວງການຕ່າງປະເທດສະຫະລັດອາເມຣິການກ່ຽວກັບ *ເສລີພາບທາງສາດສະໜາສາກົນ* ທີ່ເວັບໄຊ www.state.gov/j/drl/irf/rpt).

ການປົກປ້ອງຜູ້ລີ້ໄພ

ການເຂົ້າເຖິງສະຖານທີ່ປົກປ້ອງຜູ້ລີ້ໄພ: ກົດໝາຍກຳນົດໃຫ້ມີການປົກປ້ອງຜູ້ລີ້ໄພ ແລະ ບຸກຄົນໄຮ້ສັນຊາດ. ລັດຖະບານບໍ່ໄດ້ອະນຸຍາດໃຫ້ສະຖານະພາບແກ່ຜູ້ລີ້ໄພ ຫຼື ຜູ້ລີ້ໄພທາງການເມືອງ ໄດ້ຢ່າງເປັນປົກກະຕິ, ແຕ່ຜົນຂອງການສຶກສາ ພັດສະແດງໃຫ້ເຫັນຄວາມເປັນໄປໄດ້ ໃນການປະສານການແກ້ໄຂແຕ່ລະກໍລະນີຜູ້ລີ້ໄພທາງການເມືອງ.

ພາກທີ 3. ການເຄົາລົບໃນສິດທິທາງການເມືອງ: ສິດທິຂອງພົນລະເມືອງໃນການປ່ຽນແປງລັດຖະບານຂອງພວກເຂົາ

ພົນລະເມືອງຖືກປະຕິເສດສິດທິ ໃນການປ່ຽນແປງລັດຖະບານຂອງພວກເຂົາ. ເຖິງແມ່ນວ່າ ລັດຖະທຳມະນູນໄດ້ກຳນົດລະບົບ ເຊິ່ງປະກອບດ້ວຍ ອົງການບໍລິຫານ, ນິຕິບັນຍັດ ແລະ ຕຸລາການ, ແຕ່ ພປປລ ໄດ້ຄວບຄຸມການປົກຄອງ ແລະ ການນຳພາໃນທຸກໆຂັ້ນ ດັ່ງທີ່ໄດ້ກຳນົດ "ບົດບາດການນຳພາ" ໄວ້ໃນລັດຖະທຳມະນູນ.

ການເລືອກຕັ້ງ ແລະ ການມີສ່ວນຮ່ວມໃນວຽກງານການເມືອງ

ກົດໝາຍກຳນົດໃຫ້ມີການເລືອກຕັ້ງ ຕົວແທນສະມາຊິກສະພາແຫ່ງຊາດ ຢ່າງເປີດກ້ວາງ ທຸກໆຫ້າປີ ໂດຍຮັບເອົາຜູ້ສະໝັກຈາກຫຼາຍຂົງເຂດ, ແລະ ການເລືອກຕັ້ງກໍ່ເປັນໄປຕາມຫຼັກການສາກົນ ໂດຍຜູ້ທີ່ມີອາຍຸຄົບກຳນົດຕາມກົດໝາຍເລືອກຕັ້ງ ໄດ້ເຂົ້າຮ່ວມໃຊ້ສິດເລືອກຂີດໝາຍເອົາຜູ້ແທນໃນບັດເລືອກຕັ້ງແບບປິດລັບ. ຄະນະກຳມາທິການເລືອກຕັ້ງຖືກແຕ່ງຕັ້ງໂດຍສະພາແຫ່ງຊາດ ຈະຕ້ອງເປັນຜູ້ອະນຸມັດຜູ້ສະໝັກຮັບເລືອກຕັ້ງ ໃນລະດັບເຂດ ແລະ ລະດັບປະເທດ. ຜູ້ສະໝັກ ບໍ່ຈຳເປັນຕ້ອງແມ່ນສະມາຊິກ ພປປລ, ແຕ່ໃນທາງປະຕິບັດ ຜູ້ສະໝັກເກືອບທັງໝົດ ແມ່ນສະມາຊິກພັກ ແລະ ກວດກາໂດຍພັກ, ລວມທັງຜູ້ທີ່ເຂົ້າຮ່ວມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ປີ 2011.

ສະພາແຫ່ງຊາດ ເປັນຜູ້ເລືອກ ຫຼື ປົດຕຳແໜ່ງປະທານປະເທດ ແລະ ຮອງປະທານປະເທດ ແລະ ສະມາຊິກຂອງຄະນະປະຈຳສະພາແຫ່ງຊາດ, ເຊິ່ງຕາມປົກກະຕິແລ້ວ ແມ່ນອີງໃສ່ການແນະນຳຂອງຄະນະປະຈຳສະພາຊຸດກ່ອນ. ຄະນະປະຈຳສະພາແຫ່ງຊາດ ຍັງເປັນຜູ້ຊີ້ນຳທັງໝົດອົງການບໍລິຫານ ແລະ ຕຸລາການ; ມີອຳນາດແຕ່ພຽງຜູ້ດຽວ ທີ່ຈະແນະນຳໃຫ້ອອກລັດຖະດຳລັດຂອງປະທານປະເທດ; ແລະ ແຕ່ງຕັ້ງຄະນະກຳມະການເລືອກຕັ້ງສະມາຊິກສະພາແຫ່ງຊາດ ເຊິ່ງມີອຳນາດບໍລິຫານວຽກງານການເລືອກຕັ້ງ ລວມທັງການອະນຸມັດຜູ້ລົງສະໝັກຮັບເລືອກຕັ້ງ. ການເຄື່ອນໄຫວຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະກຳມະການເລືອກຕັ້ງສະມາຊິກສະພາແຫ່ງຊາດ ບໍ່ຄ່ອຍມີຄວາມໂປ່ງໃສ.

ໂດຍການຊີ້ນຳຂອງປະທານປະເທດ, ສະພາແຫ່ງຊາດ ຈະດຳເນີນການເລືອກຕັ້ງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການ ຂອງບັນດາກະຊວງຕ່າງໆ ຢ່າງເປັນທາງການ.

<u>ການເລືອກຕັ້ງຄັ້ງຫຼ້າສຸດ:</u> ການເລືອກຕັ້ງລະດັບຊາດຄັ້ງຫຼ້າສຸດ ແມ່ນໄດ້ດຳເນີນໃນເດືອນເມສາ 2011 ສຳລັບສະມາຊິກສະພາແຫ່ງຊາດ. ລັດຖະບານ ບໍ່ໄດ້ອະນຸຍາດ ໃຫ້ຜູ້ສັງເກດການອິສະຫຼະ ຕິດຕາມຂະບວນການເລືອກຕັ້ງດັ່ງກ່າວ.

<u>ພັກການເມືອງ:</u> ລັດຖະທຳມະນູນ ໄດ້ກຳນົດພຽງແຕ່ ພັກປະຊາຊົນປະຕິວັດລາວ (ພປປລ) ເປັນພັກທີ່ຖືກຕ້ອງຕາມກົດໝາຍ. ພັກການເມືອງອື່ນໆທັງໝົດ ແມ່ນຢູ່ນອກກົດໝາຍ.

<u>ການມີສ່ວນຮ່ວມຂອງແມ່ຍິງ ແລະ ຄົນຊົນເຜົ່າສ່ວນນ້ອຍ:</u> ມີແມ່ຍິງຈຳນວນ 33 ຄົນ ໃນຈຳນວນສະມາຊິກສະພາແຫ່ງຊາດທັງໝົດ 132 ຄົນ, ລວມມີແມ່ຍິງສອງຄົນໃນຈຳນວນຄະນະປະຈຳສະພາແຫ່ງຊາດ 10 ຄົນ, ແລະ ມີແມ່ຍິງສາມຄົນໃນຈຳນວນສະມາຊິກຂອງສານປະຊາຊົນສູງສຸດ 13 ຄົນ. ໃນຈຳນວນສະມາຊິກ 61 ຄົນຂອງຄະນະກຳມະການສູນກາງພັກ ປປລ ລວມມີແມ່ຍິງ 5 ຄົນ, ໜຶ່ງໃນນັ້ນກໍ່ຍັງເປັນສະມາຊິກ ຂອງກົມການເມືອງສູນ

ກາງພັກຈຳນວນ 11 ຄົນ ແລະ ທັງເປັນປະທານສະພາແຫ່ງຊາດນຳອີກ. ໃນຈຳນວນ 6 ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ ມີແມ່ຍິງສອງຄົນ. ລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫັວດດີການສັງຄົມ ກໍ່ແມ່ນແມ່ຍິງ.

ໃນຂະນະທີ່ 80 ເປີເຊັນຂອງປະຊາກອນທັງໝົດ ອາໄສຢູ່ເຂດຫ່າງໄກສອກຫຼີກ ບ່ອນທີ່ສ່ວນໃຫຍ່ແມ່ນນາຍ ບ້ານ ແລະ ອຳນາດການປົກຄອງບ້ານເປັນຜູ້ບໍລິຫານການແກ້ໄຂບັນຫາຕ່າງໆພາຍໃນບ້ານ, ມີຈຳນວນໜ້ອຍກວ່າ 3 ເປີ ເຊັນ ຂອງນາຍບ້ານທີ່ເປັນແມ່ຍິງ. ສະຫະພັນແມ່ຍິງລາວ (ສພລ) ແມ່ນອົງການຈັດຕັ້ງມະຫາຊົນທີ່ຂຶ້ນກັບ ພປປລ ທີ່ສຸມໃສ່ປະເດັນທີ່ກ່ຽວພັນກັບແມ່ຍິງ ໃນທຸກໆບ້ານ ແລະ ໃນທຸກໆຂັ້ນຂອງລັດຖະບານ, ສພລ ເປັນພຽງອົງການຈັດຕັ້ງດຽວເທົ່ານັ້ນ ທີ່ມີຕົວແທນໃນທຸກໆບ້ານ, ແລະ ມີພຽງສະມາຊິກ ສພລ ຄົນດຽວເທົ່ານັ້ນທີ່ ເປັນຕົວແທນໃຫ້ແມ່ຍິງ ຮ່ວມຢູ່ໃນຄະນະອຳນາດການປົກຄອງບ້ານ.

ມີສະມາຊິກຂອງຄະນະຈັດຕັ້ງສູນກາງພັກຈຳນວນເຈັດຄົນ ທີ່ເປັນຄົນຊົນເຜົ່າສ່ວນນ້ອຍ, ໃນນັ້ນ ລວມມີສອງຄົນທີ່ຢູ່ ໃນກົມການເມືອງສູນກາງພັກ. ສະພາແຫ່ງຊາດປະກອບດ້ວຍສະມາຊິກຈຳນວນ 50 ຄົນ ທີ່ເປັນຄົນຊົນເຜົ່າສ່ວນນ້ອຍ ແລະ ປະທານສະພາກໍ່ເປັນຄົນຊົນເຜົ່າສ່ວນນ້ອຍ, ໃນຂະນະທີ່ ສອງຄົນ ໃນຈຳນວນລັດຖະມົນຕີວ່າການກະຊວງ 28 ຄົນ ແມ່ນຄົນຊົນເຜົ່າສ່ວນນ້ອຍ. ໜຶ່ງໃນຄະນະປະທານສານປະຊາຊົນສູງສຸດ ກໍ່ແມ່ນຄົນຊົນເຜົ່າສ່ວນນ້ອຍ.

ພາກທີ 4. ການສໍ້ລາດບັງຫຼວງ ແລະ ການຂາດຄວາມໂປ່ງໃສໃນລັດຖະບານ

ກົດໝາຍກຳນົດໃຫ້ມີການລົງໂທດທາງອາຍາ ສຳລັບການເຄື່ອນໄຫວສໍ້ລາດບັງຫຼວງຂອງເຈົ້າໜ້າທີ່, ແຕ່ລັດຖະບານ ບໍ່ໄດ້ຈັດຕັ້ງປະຕິບັດກົດໝາຍຢ່າງມີປະສິດທິຜົນ, ແລະ ການສໍ້ລາດບັງຫຼວງ ຍັງຄົງສືບຕໍ່ເປັນບັນຫາທີ່ຮ້າຍແຮງ. ລາຍງານແຈ້ງວ່າ ເນື່ອງຈາກເຈົ້າໜ້າທີ່ຂອງລັດບໍ່ຄ່ອຍຈະຖືກລົງໂທດ, ເຖິງແມ່ນວ່າ ພວກເຂົາເຈົ້າມີສ່ວນກ່ຽວຂ້ອງ ກັບພາກປະຕິບັດທີ່ເປັນການສໍ້ລາດບັງຫຼວງເລື້ອຍໆ ໂດຍບໍ່ຖືກລົງໂທດ. ເງິນເດືອນຂອງພະນັກງານລັດຕ່ຳຫຼາຍ, ແລະ ເຈົ້າໜ້າທີ່ຫຼາຍຄົນເຊັ່ນ ຕຳຫຼວດ ເປັນຜູ້ມີອຳນາດກ້ວາງຂວາງ ທີ່ອາດສາມາດນຳໃຊ້ໃນທາງທີ່ຜິດໄດ້ງ່າຍ. ເຈົ້າໜ້າທີ່ຕຳຫຼວດຫຼາຍຄົນ ໃຊ້ອຳນາດຂອງຕົນ ເພື່ອຮຽກເກັບສິນບົນຈາກພົນລະເມືອງ. ມີລາຍງານວ່າ ຜູ້ພິພາກສາຈຳນວນໜຶ່ງ ກໍ່ອາດສາມາດມີສ່ວນກ່ຽວຂ້ອງກັບການຮັບສິນບົນເຊັ່ນກັນ. ຕໍ່ກັບວ່າ ຫຼັກສູດການຝຶກອົບ ຮົບຂອງວິທະຍາຄານປ້ອງກັນຄວາມສະຫງົບລວມມີ ການຄຸ້ມຄອງການສໍ້ລາດບັງຫຼວງບໍ່ ນັ້ນຍັງບໍ່ມີຂໍ້ມູນ.

ໃນພາກທິດສະດີ, ຄະນະກຳມາທິການກວດສອບ ແລະ ຕ້ານການສໍ້ລາດບັງຫຼວງ ຂອງລັດຖະບານ ເຊິ່ງມີອຳນາດ ທຽບເທົ່າກະຊວງ, ມີໜ້າທີ່ຮັບຜິດຊອບໃນການກວດສອບການສໍ້ລາດບັງຫຼວງໃນທຸກກະຊວງ ລວມທັງກະຊວງປ້ອງ ກັນຄວາມສະຫງົບ. ໃນຂະນະທີ່ ເຈົ້າໜ້າທີ່ໄດ້ດຳເນີນການຈັບກຸມໃນຜ່ານມາ ແລະ ລົງໂທດພະນັກງານລະດັບລ່າງຈຳນວນໜຶ່ງໃນແງ່ຂອງການປົກຄອງ ກ່ຽວກັບຂໍ້ຫາສໍ້ລາດບັງຫຼວງໃນບາງໂອກາດ, ແຕ່ສື່ມວນຊົນທີ່ລັດຄຸ້ມຄອງ ບໍ່ຄ່ອຍຈະສະເໜີຂ່າວ ກ່ຽວກັບການສໍ້ລາດບັງຫຼວງຂອງທາງການ, ແລະ

ກໍ່ບໍ່ມີການລາຍງານກ່ຽວກັບກໍລະນີດັ່ງກ່າວ ໃນປີນີ້.

ອົງການກວດສອບແຫ່ງລັດໃນລະດັບສູນກາງ ແລະ ແຂວງ ມີໜ້າທີ່ຮັບຜິດຊອບໃນການບັງຄັບໃຊ້ກົດໝາຍ ຕ້ານການສໍ້ລາດບັງຫຼວງ, ພັດຍັງສືບຕໍ່ຂາດການກຳນົດພາລະບົດບາດທີ່ຊັດເຈນ, ການເຄື່ອນ ໄຫວຢ່າງເປັນອິສະຫຼະ, ແລະ ຍັງບໍ່ມີອຳນາດພຽງພໍ ພ້ອມທັງຂາດເຂີນດ້ານທຶນຮອນ, ອຸປະກອນ, ແລະ ການສະໜັບສະໜູນດ້ານກົດໝາຍ ຈາກລັດຖະບານ.

ບໍ່ມີຂໍ້ກຳນົດທາງກົດໝາຍ ສຳລັບການເປີດເຜີຍຊັບສິນ ແລະ ລາຍຮັບຂອງເຈົ້າໜ້າທີ່ ທີ່ໄດ້ຮັບການແຕ່ງຕັ້ງ ຫຼື ຖືກເລືອກຕັ້ງ, ເຖິງແມ່ນວ່າ ນະ�โยบายຂອງ ພປປລ ຮຽກຮ້ອງໃຫ້ສະມາຊິກຂັ້ນສູງ ກ່ອນທີ່ຈະເຂົ້າດຳລົງຕຳແໜ່ງ ຕ້ອງເປີດເຜີຍຊັບສິນສ່ວນຕົວ ແລະ ພ້ອມທັງຂອງຜູ້ທີ່ຢູ່ພາຍໃຕ້ຄວາມອຸປະການະຂອງຕົນ ແຕ່ບໍ່ນັບລາຍຮັບຂອງ ເຂົາເຈົ້າ ໃຫ້ກັບຄະນະກຳມາທິການກວດສອບພັກຊາບ. ຄະນະກວດສອບດັ່ງກ່າວ ຈະກວດສອບຊັບສິນຂອງພະນັກ ງານກ່ອນ ແລະ ພາຍຫຼັງການດຳລົງຕຳແໜ່ງ. ບຸກຄົນໃດທີ່ບໍ່ປະຕິບັດຕາມນະ�โยบายນີ້ ຈະຖືກດຳເນີນມາດຕະການທີ່ບໍ່ໄດ້ລຸບຸໄວ້, ເຖິງແນວໃດກໍ່ຕາມ ພປປລ ໄດ້ນຳໃຊ້ການຄຸ້ມຄອງຂອງຕົນ ຕໍ່ອຳນາດລັດ ແລະ ສື່ມວນຊົນ ເພື່ອປິດບັງການຮັບຮູ້ຂອງປະຊາຊົນ ກ່ຽວກັບການສໍ້ລາດບັງຫຼວງຂອງເຈົ້າໜ້າທີ່ ຜູ້ ທີ່ເປັນສະມາຊິກພັກ.

ການທົບທວນນິຕິກຳ ກ່ຽວກັບພາສີອາກອນໃນປີນີ້ ແລະ ຂັ້ນຕອນການເສຍພາສີອາກອນແບບອັດຕະໂນມັດ ໄດ້ຫຼຸດຜ່ອນໂອກາດ ສຳລັບການສໍ້ລາດບັງຫຼວງໃນພາກການຄ້າ. ກົດໝາຍໃໝ່ ສົ່ງເສີມສິດໃນການຂໍອຸທອນການຕັດ ສິນ ໂດຍເຈົ້າໜ້າທີ່ພາສີອາກອນ ແລະ ສ້າງຕັ້ງຄະນະກຳມະການແກ້ໄຂການອຸທອນ ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ.

ກົດໝາຍ ບໍ່ໄດ້ກຳນົດໃຫ້ສາທາລະນະຊົນເຂົ້າເຖິງຂໍ້ມູນຂອງລັດຖະບານ, ແລະ ຕາມປົກກະຕິແລ້ວ, ລັດຖະບານໄດ້ ຄຸ້ມຄອງຢ່າງໃກ້ຊິດ ຕໍ່ກັບການກະຈາຍທຸກໆຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບການເຄື່ອນໄຫວພາຍໃນຂອງຕົນ, ໂດຍຖືວ່າ ມັນເປັນສິ່ງຈຳເປັນທີ່ຈະຕ້ອງປິດລັບເພື່ອ “ຄວາມໝັ້ນຄົງຂອງຊາດ”. ແຕ່ເຖິງຢ່າງໃດກໍ່ຕາມ, ກົດໝາຍວ່າດ້ວຍ ການສ້າງນິຕິກຳ ທີ່ປະກາດໃຊ້ໃນວັນທີ 1 ສິງຫາ ຮຽກຮ້ອງໃຫ້ມີການພິມເຜີຍແຜ່ເອກະສານນິຕິ ກຳຕ່າງໆທັງໝົດ ທັງໃນລະດັບຊາດ ກໍ່ຄືລະດັບແຂວງ ແລະ ໃຫ້ມີໄລຍະເວລາ 60 ວັນ ເພື່ອການສະແດງຄວາມຄິດເຫັນຂອງສາທາລະນະຊົນ, ສະນັ້ນ ຈຶ່ງເປັນການສົ່ງເສີມຄວາມໂປ່ງໃສ ແລະ ຄວາມເຂົ້າໃຈຂອງພົນລະເມືອງ ຕໍ່ກັບສິດທິ ແລະ ກົດໝາຍ.

ພາກທີ 5. ທັດສະນະຂອງລັດຖະບານຕໍ່ ການສອບສວນຂອງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງ ທີ່ບໍ່ຂຶ້ນກັບລັດຖະບານ ກ່ຽວກັບການລະເມີດສິດທິມະນຸດ

ໃນປະເທດ ບໍ່ມີອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ເຮັດວຽກດ້ານສິດທິມະນຸດ.

ລັດຖະບານພຽງແຕ່ ສົ່ງຄຳຕອບເປັນລາຍລັກອັກສອນແບບຜິວເຜີນ ຕໍ່ກັບການສະເໜີຂໍ້ມູນ ກ່ຽວກັບສະຖານະດ້ານສິດທິມະນຸດ ຂອງອົງການສິດທິມະນຸດສາກົນ. ແຕ່ເຖິງຢ່າງໃດກໍ່ຕາມ, ລັດຖະບານຍັງຄົງມີການພົບປະສົນທະນາ ກ່ຽວກັບສິດທິມະນຸດ ກັບບັນດາລັດຖະບານຂອງນາໆປະເທດ ແລະ ຍັງຄົງສືບຕໍ່ຮັບເອົາການຝຶກອົບຮົມ ຈາກບັນດາຜູ້ໃຫ້ທຶນຂອງສາກົນ ໃນເງື່ອນໄຂສົນທິສັນຍາສິດທິມະນຸດຂອງອົງການສະຫະປະຊາຊາດ.

<u>ອົງການສະຫະປະຊາຊາດ ແລະ ສາກົນອື່ນໆ:</u> ລັດຖະບານ ຮັກສາການພົວພັນ ແລະ ຮ່ວມມືກັບຄະ ນະກຳມະການກາງແດງສາກົນ ໃນການຈັດຕັ້ງປະຕິບັດກົດຈະກຳຕ່າງໆ ກ່ຽວກັບກົດໝາຍມະນຸດສະທຳສາກົນ. ພ້ອມກັນນັ້ນ, ລັດຖະບານກໍ່ຍັງສືບຕໍ່ເຮັດວຽກ ກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ແນະນຳການທົບທວນປະຈຳໄລຍະຂອງສະພາສິດທິມະນຸດສະຫະປະຊາຊາດ ປະຈຳປີ 2010 ທີ່ຕົນໄດ້ຮັບເອົາ.

ໃນວັນທີ 7 ເດືອນທັນວາ, ລັດຖະບານໄດ້ຂັບໄລ່ ຜູ້ອຳນວຍການປະຈຳປະເທດຂອງອົງການເຮວິຕັສ (Helvetas) ທີ່ເປັນອົງການຈັດຕັ້ງບໍ່ຂึ້ນກັບລັດຖະບານຂອງປະເທດສະວິສ໌ເຊີແລນ ເລັ່ງໃສ່ວຽກງານການພັດທະນາກະສິກຳ, ເນື່ອງຈາກ ຜູ້ກ່ຽວວິຈານຮູບແບບການເຮັດວຽກຂອງລັດຖະບານຂອງປະເທດ ໃນໜັງສື ທີ່ສົ່ງເຖິງບັນດາອົງການປະຕິບັດພາລະກິດດ້ານການຊ່ວຍເຫຼືອຂອງຕ່າງປະເທດຈຳນວນໜຶ່ງ.

ຮອດທ້າຍປີ ລັດຖະບານຍັງບໍ່ທັນຕອບ ຕໍ່ກັບການສະເໜີຂໍຢັ້ງມຢາມຢ່າງເປັນທາງການ ຂອງຜູ້ຂຽນລາຍງານພິເສດຂອງສະຫະປະຊາຊາດ ກ່ຽວກັບສິດທິດ້ານວັດທະນະທຳ ໃນວັນທີ 10 ພຶດສະພາ.

<u>ອົງການດ້ານສິດທິມະນຸດຂອງລັດຖະບານ:</u> ພະແນກສິດທິມະນຸດຂອງກະຊວງການຕ່າງປະເທດ ມີໜ້າທີ່ຮັບຜິດຊອບ ໃນການສືບສວນສອບສວນ ການກ່າວຫາ ກ່ຽວກັບການລ່ວງລະເມີດດ້ານສິດທິມະນຸດ, ເຖິງແມ່ນວ່າ ໃນພາກປະຕິບັດ ປະກົດວ່າ ພະແນກການດັ່ງກ່າວ ບໍ່ມີອຳນາດໃນການດຳເນີນການສືບສວນ ຫຼື ຊີ້ນຳບັນດາກະຊວງອື່ນໆ ໃຫ້ດຳເນີນການຕໍ່ກັບການກ່າວຫາດັ່ງກ່າວ.

ໃນເດືອນທັນວາ ລັດຖະບານໄດ້ສ້າງຕັ້ງຄະນະກຳມະການຊີ້ນຳລະດັບຊາດ ໃນການປະສານງານດ້ານສິດທິມະນຸດ ເພື່ອ ຊີ້ນຳບັນດາກະຊວງຕ່າງໆ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສິດທິມະນຸດຂອງລາວ ແລະ ສາກົນ, ເຖິງແນວໃດກໍ່ຕາມ ຄະນະກຳມະການດັ່ງກ່າວ ຍັງຂາດອຳນາດໃນການຄວບຄຸມ ແລະ ສືບສວນສອບສວນຢ່າງເປັນທາງການ.

ພາກທີ 6. ການຈຳແນກ, ການລະເມີດສິດທິທາງສັງຄົມ ແລະ ການຄ້າມະນຸດ

ລັດຖະທຳມະນູນກຳນົດໃຫ້ພົນລະເມືອງທຸກໆຄົນມີສິດເທົ່າທຽມກັນ ພາຍໃຕ້ກົດໝາຍ ໂດຍບໍ່ມີການຈຳແນກທາງດ້ານຊົນຊາດຊົນເຜົ່າ, ເພດ, ຖານະທາງສັງຄົມ, ການສຶກສາ ຫຼື ຄວາມເຊື່ອຖື, ແຕ່ບໍ່ມີການຫ້າມບໍ່ໃຫ້ຈຳແນກ

ໂດຍອີງໃສ່ ພາສາ, ຄວາມພິການ, ຄວາມເພິ່ງພໍໃຈທາງເພດ, ຫຼື ເອກະລັກທາງເພດ. ລັດຖະບານ ບາງຄັ້ງກໍ່ໄດ້ມີການດຳເນີນການໃດໜຶ່ງ ຖ້າມີຂໍ້ມູນທີ່ດີ, ກໍລະນີການຈຳແນກມີຄວາມຊັດເຈນຈະແຈ້ງ ກໍ່ຈະຖືກນຳຂຶ້ນພິຈາລະນາໃນລະດັບເຈົ້າໜ້າທີ່ຂັ້ນສູງ, ເຖິງແມ່ນວ່າ ໃນກົນໄກທາງກົດໝາຍ ພົນລະເມືອງອາດຈະຮຽກຮ້ອງກ່ຽວກັບການຈຳແນກຕໍ່ບຸກຄົນ ຫຼື ອົງກອນ ແຕ່ມັນກໍ່ຍັງບໍ່ທັນໄດ້ຮັບການພັດທະນາ ແລະ ຖືກເຂົ້າໃຈຢ່າງກ້ວາງຂວາງ.

ແມ່ຍິງ

<u>ການຂົ່ມຂືນທຳຊຳເລົາ ແລະ ການໃຊ້ຄວາມຮຸນແຮງໃນຄອບຄົວ:</u> ກົດໝາຍກຳນົດ ການຂົ່ມຂືນທຳຊຳເລົາ ແມ່ນຄວາມຜິດທາງອາຍາ, ຕ້ອງຖືກຕັດອິສະຫຼະພາບແຕ່ ສາມຫາຫ້າປີ. ສິ່ງທີ່ສຳຄັນ ການຕັດສິນໃຫ້ລົງໂທດຜູ້ກະທຳຜິດດົນກວ່າຫຼາຍ ແລະ ອາດຈະມີການຕັດສິນປະຫານຊີວິດ ໃນກໍລະນີທີ່ຜູ້ເຄາະຮ້າຍ ຫາກມີອາຍຸຕ່ຳກວ່າ 18 ປີ, ຫຼື ຫາກໄດ້ຮັບບາດເຈັບຮຸນແຮງ ຫຼື ເສຍຊີວິດ. ໃນກໍລະນີຄະດີຂົ່ມຂືນຕັດສິນຢູ່ຂັ້ນສານ, ຕາມປົກກະຕິແລ້ວ ຈຳເລີຍ ຈະຖືກຕັດສິນລົງໂທດ ໂດຍການຕັດອິສະຫຼະພາບ ຕັ້ງແຕ່ສາມປີ ໄປຈົນເຖິງປະຫານຊີວິດ. ມີລາຍງານກ່ຽວກັບການຂົ່ມຂືນ ຂ້ອນຂ້າງໜ້ອຍ, ແຕ່ແນວໃດກໍຕາມ ມັນຈະເປັນກໍລະນີອາດສະຍາກຳຫຼາຍທີ່ສຸດ ທີ່ມີການລາຍງານບໍ່ຄົບຖ້ວນຕາມຄວາມເປັນຈິງ. ທົ່ວປະເທດບໍ່ມີຖານຂໍ້ມູນອາດສະຍາກຳສູນກາງ ແລະ ກໍ່ບໍ່ສະໜອງໃຫ້ຂໍ້ມູນສະຖິຕິດັ່ງກ່າວ.

ການໃຊ້ຄວາມຮຸນແຮງໃນຄອບຄົວແມ່ນຜິດກົດໝາຍ, ແຕ່ກໍ່ບໍ່ມີກົດໝາຍປົກປ້ອງການຂົ່ມຂືນລະຫว่ວາງຄູ່ສາມີພັນລະຍາ, ແລະ ບໍ່ຄ່ອຍຈະມີການລາຍງານ ກ່ຽວກັບຄວາມຮຸນແຮງໃນຄອບຄົວ ຕາມຄວາມເປັນຈິງ ເນື່ອງຈາກວ່າ ປະເດັນດັ່ງກ່າວ ຍັງຖືເປັນມົນທິນທາງສັງຄົມ. ການລົງໂທດຕໍ່ຄວາມຜິດ ກ່ຽວກັບຄວາມຮຸນແຮງໃນຄອບຄົວ ລວມມີການບັງຄັບຂືນໃຈ, ການທຳລະມານ ແລະ ການບັງຄັບຜູ້ອື່ນໃຫ້ເຮັດໃນສິ່ງທີ່ພວກເຂົາບໍ່ປາດຖະໜາ ອາດຈະໄດ້ຮັບການລົງໂທດ ທັງສອງຢ່າງ: ການປັບໄໝ ແລະ ຕັດອິສະຫຼະພາບ. ກົດໝາຍກຳນົດໃຫ້ມີການຍົກເວັ້ນ ການຖືກລົງໂທດຕັດອິສະຫຼະພາບ ໃນກໍລະນີການທຳຮ້າຍຮ່ຳງກາຍ ບໍ່ມີການບາດເຈັບ ຫຼື ຄວາມສູນເສຍທາງກາຍະພາບ ທີ່ຮຸນແຮງ.

ໂດຍການຮ່ວມມືກັນລະຫว่ວາງ ບັນດາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ສູນໃຫ້ ຂອງແມ່ຍິງລາວ ແລະ ກະຊວງແຮງງານ ແລະ ສະຫັວດດີການສັງຄົມ ໄດ້ໃຫ້ການຊ່ວຍເຫຼືອຜູ້ເຄາະຮ້າຍຂອງການໃຊ້ຄວາມຮຸນແຮງໃນຄອບຄົວ. ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ ທີ່ນະຄອນຫຼວງວຽງຈັນ ໄດ້ເປີດການບໍລິການສາຍດ່ວນທົ່ວປະເທດ ເພື່ອໃຫ້ບຸກຄົນສາມາດໂທລາຍງານສະພາບການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ຂໍຮັບຄຳປຶກສາທາງໂທລະສັບໄດ້, ແຕ່ບໍ່ມີສະຖິຕິໃນການປະຕິບັດງານ ໃຊ້ໄດ້ຢ່າງມີປະສິດທິຜົນ. ອີງຕາມອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານອົງການໜຶ່ງ ທີ່ໄດ້ຈັດຕັ້ງໂຄງການໃຫ້ທີ່ພັກເຊົາສຳລັບເດັກນ້ອຍຈອນຈັດແຈ້ງໃຫ້ຮູ້ວ່າ ການໃຊ້ຄວາມຮຸນແຮງໃນຄອບຄົວ ແມ່ນເຫດຜົນຕົ້ນຕໍໜຶ່ງ ທີ່ເຮັດໃຫ້ເດັກນ້ອຍອອກຈາກເຮືອນ ມາອາໄສຢູ່ຕາມຂ້າງຖະໜົນໃນນະຄອນຫຼວງວຽງຈັນ, (ເບິ່ງ ພາກທີ 1.ງ.). ຂໍ້ມູນສະຖິຕິໂດຍລວມ ບໍ່ສົມເຫດສົມຜົນພໍ

ຕໍ່ກັບຈຳນວນຜູ້ໃຊ້ຄວາມຮຸນແຮງ ທີ່ໄດ້ຖືກດຳເນີນຄະດີ, ຖືກຕັດສິນວ່າມີຄວາມຜິດ, ຫຼື ຖືກລົງໂທດ, ແຕ່ໃນປີນີ້ ສູນໃຫ້ການຊ່ວຍເຫຼືອຂອງສະຫະພັນແມ່ຍິງລາວ ໄດ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈຳນວນ 58 ຄົນ ທີ່ເຄາະຮ້າຍ ຈາກການຖືກຂົ່ມຂືນ, ການໃຊ້ຄວາມຮຸນແຮງໃນຄອບຄົວ ແລະ ການຄ້າມະນຸດ.

<u>ການຄຸກຄາມທາງເພດ:</u> ເຖິງແມ່ນວ່າການຄຸກຄາມທາງເພດບໍ່ແມ່ນເລື່ອງທີ່ຜິດກົດໝາຍ, ແຕ່ "ການສະແດງພຶດຕິກຳ ທາງເພດທີ່ບໍ່ເໝາະສົມ" ຕໍ່ຜູ້ອື່ນ ຖືວ່າເປັນການກະທຳຜິດກົດໝາຍ ແລະ ຖືກລົງໂທດດ້ວຍການຕັດອິສະຫຼະພາບ ແຕ່ຫົກເດືອນຫາສາມປີ. ບໍ່ຄ່ອຍມີການລາຍງານກ່ຽວກັບການຄຸກຄາມທາງເພດ ແລະ ມັນກໍ່ເປັນການຍາກທີ່ຈະ ເຂົ້າເຖິງ.

<u>ສິດທິທາງດ້ານການຈະເລີນພັນ:</u> ຄອບຄົວ ແລະ ບຸກຄົນ ມີສິດທີ່ຈະຕັດສິນໃຈກ່ຽວກັບ ຈຳນວນ, ຄວາມຫ່າງ ແລະ ຊ່ວງເວລາໃນການມີລູກ, ແລະ ກໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ສິ່ງອຳນວຍຄວາມສະດວກໃນການກະທຳ ດັ່ງກ່າວ ໂດຍບໍ່ມີການຈຳແນກ. ການເຂົ້າເຖິງຂໍ້ມູນກ່ຽວກັບການຄຸມກຳເນີດ ຕາມທຳມະດາແລ້ວ ແມ່ນສາມາດເປັນ ໄປໄດ້, ແຕ່ເຖິງແນວໃດກໍຕາມ ສິ່ງອຳນວຍຄວາມສະດວກໃນການຄຸມກຳເນີດ ໃນເຂດຫ່າງໄກສອກຫຼີກຍັງບໍ່ພຽງພໍ ແລະ ສ່ວນໃຫຍ່ບັນຫາກໍຄືດ້ານການເງິນ. *ການສຳຫຼວດຕົວຊີ້ວັດດ້ານສັງຄົມລາວ* (ທີ່ເຜີຍແຜ່ໃນ ເດືອນຕຸລາພ້ອມຂໍ້ມູນທີ່ເກັບກຳໃນປີ 2011) ໄດ້ຄາດຄະເນວ່າ ອັດຕາການເຂົ້າເຖິງການບໍລິການຄຸມກຳເນີດ ຂອງແມ່ຍິງໃນໄວຈະເລີນພັນທີ່ມີອາຍຸລະຫ່ວາງ (15 – 49 ປີ) ສຳລັບທຸກວິທີຂອງການຄຸມກຳເນີດ ໄດ້ເພີ່ມຂຶ້ນ ຈາກ 38 ເປີເຊັນ (ໃນປີ 2010) ເປັນ 50 ເປີເຊັນ. ປັດໃຈຫຼັກທີ່ສົ່ງຜົນໃຫ້ອັດຕາສ່ວນດັ່ງກ່າວສືບຕໍ່ ຢູ່ໃນລະດັບຕ່ຳກໍ່ຄື ຄວາມຕ້ອງການຜູ້ຊ່ວຍເກີດລູກທີ່ມີຄວາມຊຳນານຍັງມີສູງ ແລະ ຂາດການເຂົ້າເຖິງການຄຸມກຳເນີດແບບທັນສະໄໝຂອງປະຊາຊົນໃນເຂດຫ່າງໄປສອກຫຼີກ. ພ້ອມກັນນັ້ນ, ບົດລາຍງານການສຳຫຼວດ ຍັງຄາດຄະເນວ່າ ອັດຕາການຕາຍຂອງແມ່ໄດ້ຫຼຸດລົງຈາກ 470 (ໃນປີ 2010) ມາເປັນ 357 ຕໍ່ຈຳນວນການເກີດມີຊີວິດ 100,000 ຄົນ. ປັດໃຈສຳຄັນທີ່ສົ່ງຜົນຕໍ່ອັດຕາສ່ວນດັ່ງກ່າວ ແມ່ນເນື່ອງມາ ຈາກຄວາມສັບສົນທາງສູນຕິເວດ, ການເຮັດແທ້ງທີ່ບໍ່ສຳເລັດສົມບູນ, ແລະ ຂາດການເຂົ້າເຖິງການດູແລໃນ ເວລາເກີດລູກແບບສຸກເສີນ. ອັດຕາການເສຍຊີວິດໃນລະຫ່ວາງຖືພາ ແລະ ໃນລະຫ່ວາງເກີດລູກ ແມ່ນສາຍເຫດຕົ້ນຕໍ ຂອງການເສຍຊີວິດຂອງແມ່ຍິງໃນໄວຈະເລີນພັນ. ມີພຽງແມ່ຍິງຈຳນວນໜ້ອຍ ທີ່ເຂົ້າເຖິງການບໍລິການຂອງຜູ້ຊ່ວຍເກີດລູກທີ່ມີຄວາມຊຳນານງານ, ແລະ ສູນການແພດທີ່ມີອຸປະກອນຊ່ວຍເກີດລູກ ກຳລະນີຍາກ ແມ່ນມີໜ້ອຍຫຼາຍ, ໂດຍສະເພາະຢູ່ໃນໝູ່ບ້ານຊົນເຜົ່າສ່ວນນ້ອຍ, ເຂດຫ່າງໄກສອກຫຼີກ ບ່ອນທີ່ບໍ່ມີແພດໝໍ.

<u>ການຈຳແນກ</u>: ກົດໝາຍກຳນົດສິດທິເທົ່າທຽມ ສຳລັບແມ່ຍິງ, ແຕ່ທັດສະນະຄະຕິດັ້ງເດີມ ແລະ ການປະຫວັດປະຕິບັດ ຂອງສັງຄົມທາງດ້ານບົດບາດຍິງຊາຍ ໄດ້ເຮັດໃຫ້ແມ່ຍິງ ແລະ ເດັກຍິງຕ້ອງຢູ່ໃນຖານະຮອງລົງມາ ແລະ ເປັນການ ເຮັດໃຫ້ພວກເຂົາເຈົ້າ ບໍ່ມີຄວາມເທົ່າທຽມກັນໃນການເຂົ້າເຖິງໂອກາດທາງດ້ານການສຶກສາ ແລະ ທຸລະກິດ. ປະກົດ ວ່າ ລັດຖະບານຍັງບໍ່ທັນມີຄວາມພະຍາຍາມຫຼາຍພໍ ໃນການແກ້ໄຂສະຖານະການນີ້. ເຊັ່ນດຽວກັນ, ກົດໝາຍຍັງ ຫ້າມ ການຈຳແນກທີ່ຖືກກົດໝາຍ ໃນການແຕ່ງງານ ແລະ ການສືບທອດມໍລະດົກ, ເຖິງແນວໃດກໍຕາມ ລະດັບ

ຂອງການຈຳແນກຕໍ່ແມ່ຍິງມີຄວາມຫຼາກຫຼາຍອີງໃສ່ທາງດ້ານວັດທະນະທຳ ແມ່ນຍັງມີຢູ່, ເຊິ່ງສ່ວນໃຫຍ່ຂອງການຈຳແນກໃນລັກສະນະນີ້ ມັກຈະເກີດຂຶ້ນໃນບາງຊົນເຜົ່າຕາມເຂດພູດອຍ.

ສະຫະພັນແມ່ຍິງລາວ ໄດ້ດຳເນີນການຢ່າງກ້ວາງຂວາງທົ່ວປະເທດ ເພື່ອສົ່ງເສີມຖານະຂອງແມ່ຍິງໃນສັງຄົມ, ລວມມີ ການຈັດຕັ້ງປະຕິບັດຫຼາຍໂຄງການ ເພື່ອສ້າງຄວາມເຂັ້ມແຂງບົດບາດຂອງແມ່ຍິງ ເຊິ່ງມີປະສິດທິຜົນຫຼາຍສຸດ ຢູ່ໃນເຂດຕົວເມືອງ. ແມ່ຍິງຫຼາຍຄົນໄດ້ດຳລົງຕຳແໜ່ງໃນລະດັບການຕັດສິນໃຈ ໃນຂົງເຂດລາດຊະການ ແລະ ທຸລະກິດເອກະຊົນ, ແລະ ຢູ່ໃນເຂດຕົວເມືອງ ລາຍໄດ້ຂອງແມ່ຍິງເຫຼົ່ານີ້ ກໍສູງກວ່າຜູ້ຊາຍ. ຄວາມທຸກຍາກຍັງຄົງສືບຕໍ່ ສົ່ງຜົນກະທົບແກ່ແມ່ຍິງໃນສັດສ່ວນທີ່ບໍ່ສະເໝີກັນ, ໂດຍສະເພາະ ໃນເຂດຊຸມຊົນເຜົ່າສ່ວນນ້ອຍທີ່ຫ່າງໄກສອກຫຼີກ. ໃນຂະນະທີ່ແມ່ຍິງໃນຊົນນະບົດ ເປັນຜູ້ແບກຫາບຫຼາຍກວ່າເຄິ່ງໜຶ່ງຂອງພາລະການຜະລິດກະສິກຳທັງໝົດ, ແຕ່ພາລະທາງດ້ານວຽກເຮືອນ ແລະ ການເບິ່ງແຍງລູກໆ ກໍ່ຍັງຕົກເປັນພັນທະຕົ້ນຕໍຂອງແມ່ຍິງເຊັ່ນດຽວກັນ.

ເອກະສານດ້ານຍຸດທະສາດແຫ່ງຊາດສະບັບທີສອງ ຂອງຄະນະກຳມາທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ທີ່ຖືກກຳນົດອອກໃນວັນທີ 19 ກຸມພາ ໄດ້ໃຫ້ແນວທາງວິທີທັນເອົາພັນທະທາງການເມືອງ ເພື່ອໃຫ້ສອດຄອງກັບຂໍ້ຕົກລົງສາກົນ ນຳໃຊ້ເຂົ້າໃນພາກປະຕິບັດ ເພື່ອລຶບລ້າງທຸກຮູບແບບຂອງການຈຳແນກແມ່ຍິງ. ໃນບາດກ້າວສູ່ການຈັດຕັ້ງປະຕິບັດ, ລັດຖະບານໄດ້ສ້າງຕັ້ງອານຸກຳມະການທົ່ວປະເທດໃນຂັ້ນກະຊວງ, ອົງການຈັດຕັ້ງຂອງພາກລັດ, ແລະ ໃນຂັ້ນບໍລິຫານ (ແຂວງ, ເມືອງ ແລະ ບ້ານ) ເພື່ອຍົກສູງການສ້າງນະ�โยบาย ແລະ ການຕິດຕາມກວດກາການປະຕິບັດງານ.

ເດັກນ້ອຍ

<u>ການຂຶ້ນທະບຽນການເກີດ:</u> ບໍ່ວ່າຈະເກີດຢູ່ໃສກໍ່ຕາມ, ເດັກນ້ອຍຈະໄດ້ຮັບສິດໃນການເປັນພົນລະເມືອງ ຖ້າວ່າທັງພໍ່ ແລະ ແມ່ ຫາກເປັນພົນລະເມືອງຂອງປະເທດ. ເດັກທີ່ເກີດຈາກພໍ່ ຫຼື ແມ່ ທີ່ເປັນພົນລະເມືອງຂອງປະເທດ ກໍ່ຈະໄດ້ຮັບສິດເປັນພົນລະເມືອງເຊັ່ນດຽວກັນ ຖ້າເດັກຫາກເກີດຢູ່ໃນປະເທດ ຫຼື ນອກພົມແດນຂອງປະເທດ, ຫຼື ຖ້າຫາກພໍ່ ຫຼື ແມ່ ມີທີ່ຢູ່ຖາວອນໃນປະເທດ. ບໍ່ແມ່ນເດັກທີ່ເກີດໃໝ່ທຸກຄົນ ຈະໄດ້ຂຶ້ນທະບຽນໂດຍທັນທີ.

<u>ການສຶກສາ:</u> ການສຶກສາຖືວ່າເປັນພາກບັງຄັບ ແລະ ບໍ່ໄດ້ເສຍຄ່າຈົນຈົບຊັ້ນປະຖົມປີທີຫ້າ, ແຕ່ການຂາດແຄນຄູສອນ ແລະ ຄວາມຄາດຫວັງທີ່ເດັກນ້ອຍຕ້ອງຊ່ວຍພໍ່ແມ່ ເຮັດໄຮ່ເຮັດນາ ໃນເຂດຊົນນະບົດຫ່າງໄປສອກຫຼີກ ຍັງຄົງເປັນສິ່ງກີດກັ້ນເດັກນ້ອຍຈຳນວນໜຶ່ງບໍ່ໃຫ້ເຂົ້າຮຽນ. ມີຄວາມແຕກຕ່າງກັນຢ່າງຊັດເຈນ ໃນການໄດ້ຮັບໂອກາດທາງການສຶກສາລະຫວ່າງເດັກຊາຍ ແລະ ເດັກຍິງ ຂອງຊົນເຜົ່າສ່ວນນ້ອຍ. ເຖິງແມ່ນວ່າ ນະ�โยบายຂອງລັດຖະບານແມ່ນເຮັດໃຫ້ກຸ່ມຄົນຊົນເຜົ່າສ່ວນນ້ອຍ ຮັບຮູ້ໃນຜົນປະ�โຫຍດດ້ານການສຶກສາຂອງເດັກນ້ອຍທັງໝົດ, ແຕ່ຍັງມີບາງສ່ວນທີ່ຍັງຄິດວ່າ ການສຶກສາສຳລັບເດັກຍິງແມ່ນບໍ່ມີຄວາມຈຳເປັນ ແລະ ກໍ່ບໍ່ມີຜົນປະ�โຫຍດຫຍັງ. ເຖິງແມ່ນວ່າ ຄວາມບໍ່ສະເໝີພາບລະຫວ່າງຍິງຊາຍໄດ້ສືບຕໍ່ຫຼຸດລົງ, ແຕ່ອັດຕາການເຂົ້າຮຽນຂອງເດັກຍິງຍັງຄົງຕ່ຳກວ່າເດັກຊາຍ.

ຕໍ່ກັບຄວາມພະຍາຍາມໃນການເພີ່ມອັດຕາການເຂົ້າຮຽນຊັ້ນປະຖົມຂອງເດັກຊົນເຜົ່າສ່ວນນ້ອຍ, ລັດຖະບານໄດ້ສືບຕໍ່ສະໜັບສະໜູນການສ້າງຫໍພັກ ສຳລັບນັກຮຽນໃນເຂດຊົນນະບົດຫ່າງໄກສອກຫຼີກໃນທົ່ວປະເທດ.

<u>ການໃຊ້ຄວາມຮຸນແຮງຕໍ່ເດັກ:</u> ກົດໝາຍຫ້າມການໃຊ້ຄວາມຮຸນແຮງຕໍ່ເດັກ, ແລະ ຜູ້ກະທຳຜິດ ຈະຖືກສຶກສາອົບຮົມ ແລະ ຈະໄດ້ຮັບມາດຕະການການລົງໂທດທີ່ບໍ່ໄດ້ລະບຸໄວ້ ຖ້າເປັນກໍລະນີທີ່ຮ້າຍແຮງ. ເຖິງແມ່ນວ່າ ການລາຍງານທາງການກ່ຽວກັບການໃຊ້ຄວາມຮຸນແຮງຕໍ່ເດັກມີຈຳນວນນ້ອຍ, ແຕ່ກໍ່ພໍມີຫຼັກຖານລະບຸວ່າ ໃນປີນີ້ຍັງຄົງມີບັນຫາດັ່ງກ່າວຢູ່.

<u>ການແຕ່ງງານກ່ອນໄວອັນຄວນ:</u> ກົດໝາຍກຳນົດອາຍຸນ້ອຍສຸດຂອງການແຕ່ງງານ ສຳລັບຜູ້ຍິງ ແລະ ຜູ້ຊາຍແມ່ນ 18 ປີ, ແຕ່ກົດໝາຍອະນຸຍາດ ການແຕ່ງງານກ່ອນໄວອັນຄວນໃນ "ກໍລະນີພິເສດ ແລະ ຈຳເປັນ", ສ່ວນໃຫຍ່ຈະແມ່ນກໍລະນີຖືພາກ່ອນໄວອັນຄວນ. ບັນທັດຖານທາງວັດທະນະທຳຂອງກຸ່ມຊົນເຜົ່າສ່ວນນ້ອຍຈຳນວນໜຶ່ງສົ່ງຜົນໃຫ້ຮູ້ໄດ້ ອັດຕາສ່ວນຮ້ອຍກໍລະນີຂອງແມ່ຍິງທີ່ແຕ່ງງານກ່ອນອາຍຸ 18 ປີ ໄດ້ບໍ່ແນ່ນອນ (ແຕ່ເຊື່ອວ່າມີຈຳນວນຫຼາຍ).

<u>ການສະແຫວງຫາຜົນປະ�โຫຍດທາງເພດຈາກເດັກ:</u> ກົດໝາຍບໍ່ມີບົດລົງ�โທດສະເພາະຕໍ່ໂສເພນີເດັກ, ແຕ່ກົດໝາຍກຳນົດການປັບໄໝ ແລະ ລົງ�โທດຕໍ່ຜູ້ທີ່ຮ່ວມເພດກັບເດັກນ້ອຍ (ອາຍຸຕ່ຳກວ່າ 15 ປີ, ອາຍຸທີ່ສາມາດໃຫ້ຄວາມຍິນຍອມ) ໂດຍຈະຖືກຕັດອິສະຫຼະພາບແຕ່ ໜຶ່ງຫາຫ້າປີ ແລະ ຖືກປັບໄໝ ຈຳນວນ 500,000 ຫາ ສາມລ້ານກີບ (ປະມານ 63 ຫາ 377 ໂດລາ). ກົດໝາຍບໍ່ໄດ້ກຳນົດວ່າ ການຂົ່ມຂືນທຳສຳເລັດທີ່ຍິນຍອມ ເປັນຄືອາດສະຍາກຳ ເຊິ່ງແຕກຕ່າງຈາກການຮ່ວມເພດກັບເດັກ ແລະ ການຂົ່ມຂືນບຸກຄົນອື່ນ. ການລົງ�โທດຕໍ່ຜູ້ກະທຳຜິດກ່ຽວກັບສື່ລາມົກເດັກນ້ອຍ ແມ່ນບໍ່ແຕກຕ່າງຈາກສື່ລາມົກທົ່ວໆໄປ, ການຕັດສິນລົງ�โທດແມ່ນ ຕັດອິສະຫຼະພາບແຕ່ສາມເດືອນຫາໜຶ່ງປີ ແລະ ປັບໄໝ 50,000 ຫາ 200,000 ກີບ (6 ຫາ 25 ໂດລາ).

ການທ່ອງທ່ຽວໃນປະເທດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ຄຽງຄູ່ກັບການເພີ່ມຂຶ້ນຂອງການທ່ອງທ່ຽວເພື່ອມີເພດສຳພັນກັບເດັກໃນແຖບອາຊີຕາເວັນອອກສຽງໃຕ້ ເຮັດໃຫ້ເຈົ້າໜ້າທີ່ຕ້ອງຫາວິທີປ້ອງກັນການທ່ອງທ່ຽວເພື່ອມີເພດສຳພັນກັບເດັກ. ລັດຖະບານສືບຕໍ່ຄວາມພະຍາຍາມໃນການຫຼຸດຜ່ອນ ການສະເໜີຄວາມຕ້ອງການໃນການຊື້-ຂາຍບໍລິການທາງເພດ ໂດຍການເຂົ້າໄປກວດຄົ້ນ ແລະ ຈັດຝຶກອົບຮົມສຳມະນາເປັນແຕ່ລະໄລຍະ ແລະ ໃຫ້ການຊ່ວຍເຫຼືອຜູ້ເຄາະຮ້າຍ ຊຶ່ງເປັນສ່ວນໜຶ່ງຂອງແຜນການຫຼາຍໆປີຂອງປະເທດ. ລັດຖະບານໄດ້ຮ່ວມກັບອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຈັດສຳມະນາຂຶ້ນ ເພື່ອອົບຮົມພະນັກງານພະແນກທ່ອງທ່ຽວ, ລວມມີຄົນຂັບລົດແທັກຊີ ແລະ ຕຳຫຼວດທ່ອງທ່ຽວ, ແລະ ຍັງໄດ້ຈັດຕັ້ງປະຕິບັດການ�โຄສະນາປະຊາສຳພັນຂຶ້ນໃນເດືອນຕຸລາ ກ່ອນໜ້າກອງປະຊຸມສາກົນໃນລະດັບພາກພື້ນ. ຕົວຢ່າງ: ບັນດາ�โຮງແຮມໃຫຍ່ລະດັບສາກົນທີ່ນະຄອນຫຼວງວຽງຈັນ ແລະ ເມືອງຫຼວງພະບາງ ໄດ້ປັບປຸງການວາງສະແດງພາບโປສເຕີຂອງພວກເຂົາ ເພື່ອສະແດງຂໍ້ຄວາມຕ້ານການທ່ອງທ່ຽວເພື່ອມີເພດສຳພັນກັບເດັກ.

ການລັກພາຕົວເດັກຂ້າມຊາດ: ປະເທດລາວ ບໍ່ໄດ້ເປັນສະມາຊິກ ຂອງອານຸສັນຍາກຸງເຮກ ປີ 1980 ວ່າດ້ວຍການລັກພາຕົວເດັກຂ້າມຊາດ.

ການຕໍ່ຕ້ານລັດທິເຊໄມ:

ບໍ່ມີຂໍ້ມູນກ່ຽວກັບ ຊຸມຊົນຊາວຢິວ ຢູ່ໃນປະເທດ, ແລະ ບໍ່ມີການລາຍງານກ່ຽວກັບການຕໍ່ຕ້ານການເຄື່ອນໄຫວຂອງຊາວເຊໄມ.

ການຄ້າມະນຸດ

ເບິ່ງ*ລາຍງານກ່ຽວກັບການຄ້າມະນຸດ* ຂອງກະຊວງການຕ່າງປະເທດສະຫະລັດອາເມຣິກາ ໄດ້ທີ່ເວັບໄຊ www.state.gov/j/tip.

ຄົນພິການ

ເຖິງວ່າ ລັດຖະທຳມະນູນໄດ້ມີການປົກປ້ອງຕ້ານການຈຳແນກ ບໍ່ໄດ້ປະຕິບັດສະເພາະກັບກຸ່ມຄົນພິການໃນທຸກຮູບແບບ, ແຕ່ລະບຽບການທີ່ປະກາດນຳໃຊ້ໂດຍ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຄະນະກຳມາທິການແຫ່ງຊາດເພື່ອຄົນພິການ ໄດ້ກຳນົດໃຫ້ມີການປົກປ້ອງກຸ່ມຄົນດັ່ງກ່າວ ຈາກການຈຳແນກ. ແຕ່ເຖິງຢ່າງໃດກໍ່ຕາມ, ລະບຽບການດັ່ງກ່າວ ຍັງຄົງຂາດການບັງຄັບທາງກົດໝາຍ.

ກະຊວງສາທາລະນະສຸກ ມີໜ້າທີ່ຮັບຜິດຊອບຂັ້ນພື້ນຖານ ໃນການປົກປ້ອງສິດທິຂອງຄົນພິການ. ເພາະວ່າ ຄົນພິການ ສ່ວນໃຫຍ່ແມ່ນໄດ້ຮັບຜົນກະທົບຈາກລະເບີດທີ່ຍັງບໍ່ທັນແຕກ, ກະຊວງໄດ້ສືບຕໍ່ປະຕິບັດໜ້າທີ່ກ່ຽວກັບບັນຫານີ້ຢ່າງເອົາຈິງເອົາຈັງ, ໂດຍສະເພາະແມ່ນ ການຮ່ວມມືກັບອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ ເພື່ອເປີດສູນຟື້ນຟູໜ້າທີ່ການ ທີ່ສະໜອງແຂນຂາທຽມ, ແກ້ໄຂບັນຫາຕີນຄົດງໍ, ແລະ ໃຫ້ການສຶກສາແກ່ຄົນຫູໜວກ ແລະ ຕາບອດ.

ອີງຕາມຂໍ້ມູນ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ກົດໝາຍກຳນົດວ່າ ໂຄງການກໍ່ສ້າງທີ່ເລີ່ມຕົ້ນຫຼັງ ປີ 2009 ຕ້ອງສະໜອງສິ່ງອຳນວຍຄວາມສະດວກໃຫ້ແກ່ຄົນພິການ ແລະ ຜູ້ສູງອາຍຸ, ໂດຍສະເພາະແມ່ນໂຄງການກໍ່ສ້າງອາຄານ, ຖະໜົນ ແລະ ສະຖານທີ່ສາທາລະນະ. ກົດໝາຍບໍ່ໄດ້ກຳນົດການສ້າງທາງເຂົ້າ ສຳລັບຄົນພິການໃນບັນດາອາຄານທີ່ສ້າງຂຶ້ນກ່ອນປີທີ່ກົດໝາຍກຳນົດ ຫຼື ການໃຫ້ບໍລິການຂອງລັດຖະບານແກ່ຄົນພິການ, ແຕ່ວ່າ ລະບຽບການຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນປີ 2011 ມີຜົນຕໍ່ການກໍ່ສ້າງທາງຍ່າງທີ່ຮາບພຽງເພີ້ມ ຢູ່ນະຄອນຫຼວງວຽງຈັນ ໃນປີນີ້. ໃນຂະນະທີ່ມີຄວາມຄືບໜ້າທາງດ້ານການເຂົ້າເຖິງ, ແຕ່ການຂາດຊັບພະຍາກອນສຳລັບໂຄງລ່າງພື້ນຖານ ໄດ້ສົ່ງຜົນໃຫ້ການເສີມສິ່ງກໍ່ສ້າງໃນອາຄານທັງໝົດຊັກຊ້າ ແລະ ຂໍ້ຈຳກັດທາງດ້ານບຸກຄະລາກອນຂອງພາກລັດ ມີຜົນກະທົບຕໍ່ປະສິດທິພາບ

ໃນການຈັດຕັ້ງປະຕິບັດ. ບໍ່ມີການລາຍງານ ກ່ຽວກັບການຈຳແນກໃນສະຖານທີ່ເຮັດວຽກ.

ລັດຖະບານ ໄດ້ສືບຕໍ່ຈັດຕັ້ງປະຕິບັດແຜນຍຸດທະສາດຂອງຕົນ ເພື່ອປົກປ້ອງສິດທິຂອງເດັກພິການ ແລະ ສົ່ງເສີມໃຫ້ເຂົາເຈົ້າໄດ້ຮຽນໜັງສືຢູ່ໃນໂຮງຮຽນ ຄ່ຽງຄູ່ກັບເດັກນ້ອຍຄົນອື່ນໆ ໃນທົ່ວປະເທດ.

ຊາດ/ເຊື້ອຊາດ/ຊົນເຜົ່າສ່ວນນ້ອຍ

ກົດໝາຍກຳນົດສິດເທົ່າທຽມສຳລັບພົນລະເມືອງທຸກຊົນເຜົ່າ ແລະ ຫ້າມການຈຳແນກຕໍ່ເຂົາເຈົ້າ. ແຕ່ເຖິງຢ່າງໃດກໍ່ຕາມ, ຍັງຄົງປະກົດມີການຈຳແນກທາງສັງຄົມເກີດຂຶ້ນຢູ່. ຮ້າຍແຮງໄປກວ່ານັ້ນ, ຍັງຄົງສືບຕໍ່ມີການວິພາກວິຈານກ່ຽວກັບໂຄງການຕັ້ງຖິ່ນຖານຄືນໃໝ່ຂອງລັດຖະບານ ເພື່ອຍຸດຕິການຜະລິດກະສິກຳແບບຖາງປ່າເຮັດໄຮ່ ແລະ ການປູກຝິ່ນວ່າ ໃນທາງກັບກັນ ມັນໄດ້ສົ່ງຜົນກະທົບໃຫ້ແກ່ກຸ່ມຄົນຊົນເຜົ່າສ່ວນນ້ອຍຈຳນວນຫຼາຍ, ເປັນຕົ້ນແມ່ນ ຢູ່ທາງພາກເໜືອ. ໂຄງການ ຕ້ອງການໃຫ້ຊາວບ້ານທີ່ຕັ້ງຖິ່ນຖານໃໝ່ນີ້ ປັບຕົວເຂົ້າກັບການເຮັດນາ ແລະ ດຳລົງຊີວິດຮ່ວມກັບຊຸມຊົນໃຫຍ່, ເຊິ່ງນີ້ເປັນການທີ່ບໍ່ໃສ່ໃຈຕໍ່ປະເພນີການດຳລົງຊີວິດ ແລະ ໂຄງສ້າງຊຸມຊົນຂອງກຸ່ມຄົນຊົນເຜົ່າສ່ວນນ້ອຍເຫຼົ່ານີ້. ຜູ້ສັງເກດການສາກົນໄດ້ຕັ້ງຄຳຖາມວ່າ ຜົນປະ�โຫຍດທີ່ລັດຖະບານສົ່ງເສີມໃຫ້ຊາວບ້ານຕັ້ງຖິ່ນຖານໃໝ່ເຫຼົ່ານີ້ ບໍ່ວ່າຈະເປັນການເຂົ້າເຖິງຕະຫຼາດ, ໂຮງຮຽນ ແລະ ການດູແລດ້ານສຸຂະພາບນັ້ນ ມີນ້ຳໜັກຫຼາຍກວ່າຜົນກະທົບໃນທາງລົບ ຕໍ່ວິຖີວັດທະນະທຳຮີດຄອງປະເພນີຂອງພວກເຂົາບໍ່. ກຸ່ມຄົນຊົນເຜົ່າສ່ວນນ້ອຍຈຳນວນໜຶ່ງ ທີ່ບໍ່ໄດ້ເຂົ້າຮ່ວມໃນໂຄງການຕັ້ງຖິ່ນຖານຄືນໃໝ່, ເປັນທີ່ສັງເກດໄດ້ວ່າ ຈຳນວນທີ່ຢູ່ພື້ນທີ່ຫ່າງໄກສອກຫຼີກ ເຊິ່ງມີສິດສຽງພຽງເລັກນ້ອຍ ຕໍ່ການຕັດສິນໃຈຂອງລັດຖະບານ ທີ່ໄດ້ຮັບຜົນກະທົບຕໍ່ທີ່ດິນຂອງພວກເຂົາ ແລະ ການຈັດສັນຊັບພະຍາກອນທຳມະຊາດຈາກພື້ນທີ່ຂອງພວກເຂົາ.

ໃນຈຳນວນ 49 ຊົນເຜົ່າທີ່ເປັນທາງການຂອງປະເທດນັ້ນ, ເຜົ່າມົ້ງເປັນເຜົ່າທີ່ໃຫຍ່ທີ່ສຸດ ແລະ ໂດດເດັ່ນທີ່ສຸດ. ມີຄົນເຜົ່າມົ້ງດຳລົງຕຳແໜ່ງສຳຄັນຫຼາຍຕຳແໜ່ງໃນຂັ້ນລັດຖະບານ ແລະ ພປປລ, ລວມທັງສະມາຊິກກົມການເມືອງສູນກາງພັກໜຶ່ງຄົນ ແລະ ສະມາຊິກຄະນະກຳມະການສູນກາງພັກ ປປລ ຫ້າຄົນ. ແຕ່ເຖິງຢ່າງໃດກໍ່ຕາມ, ຄົນເຜົ່າມົ້ງຈຳນວນໜຶ່ງ ເຊື່ອວ່າເຜົ່າຂອງພວກເຂົາ ບໍ່ສາມາດຢູ່ຮ່ວມກັບເຜົ່າລາວລຸ່ມຢ່າງສັນຕິໄດ້, ເປັນຄວາມເຊື່ອທີ່ພັດເປົ່າໃຫ້ມີຄວາມແຕກແຍກ ຫຼື ສ້າງຄວາມເຊື່ອໃນການແບ່ງແຍກດິນແດນ. ຍິ່ງໄປກວ່ານັ້ນ, ຂັ້ນນຳພາກລັດຍັງຄົງສົງໄສຕໍ່ວັດຖຸປະສົງທາງການເມືອງຂອງເຜົ່າມົ້ງ. ລັດຖະບານໄດ້ສືບຕໍ່ສຸມໃສ່ໂຄງການຊ່ວຍເຫຼືອທີ່ມີຈຳກັດໃສ່ເຂດພື້ນທີ່ອາໄສຂອງເຜົ່າມົ້ງ ເພື່ອແກ້ໄຂບັນຫາຄວາມແຕກຕ່າງທາງດ້ານລາຍຮັບຂອງຄົນທີ່ຢູ່ເຂດຫ່າງໄກ ແລະ ຊົນເຜົ່າສ່ວນນ້ອຍ ເຊິ່ງເປັນການຊ່ວຍປັບປຸງສະພາບເງື່ອນໄຂຂອງເມືອງທີ່ທຸກຍາກທີ່ສຸດ.

ເຖິງແມ່ນວ່າ ບໍ່ມີການຢືນຢັນຈາກລັດຖະບານ, ແຕ່ມີລາຍງານຈຳນວນໜຶ່ງກ່ຽວກັບການປະທະກັນເລັກນ້ອຍເກີດຂຶ້ນໃນລະຫว່ວງທ້າຍເດືອນມີຖຸນາ / ຕົ້ນເດືອນກໍລະກົດ ລະຫว່ວງກຸ່ມຄົນເຜົ່າມົ້ງ ທີ່ກໍ່ຄວາມບໍ່ສະຫງົບຈຳນວນໜຶ່ງທີ່ຢູ່ໃກ້ກັບບ້ານໂພນສະຫວັນ, ເມືອງຜາໄຊ ແຂວງຊຽງຂວາງ ເຊິ່ງສົ່ງຜົນໃຫ້ກຸ່ມຄົນເຜົ່າມົ້ງກໍ່ຄວາມບໍ່ສະຫງົບເສຍຊີວິດເຈັດຄົນ ແລະ ຝ່ายທະຫານເສຍຊີວິດ ສີ່ຄົນ. ສິ່ງເສດເຫຼືອເລັກໆນ້ອຍໆ ຈາກການເຄື່ອນຍ້ายຂອງກຸ່ມຄົນເຜົ່າມົ້ງທີ່

ກໍ່ຄວາມບໍ່ສະຫງົບ ແລະ ຄອບຄົວຂອງພວກເຂົາຍັງຄົງມີປະກົດໃຫ້ເຫັນຢູ່ໃນປ່າເລີກເຂດຫ່າງໄກສອກຫຼີກ. ລັດຖະບານ ຍັງຄົງສືບຕໍ່ຫຼຸດຜ່ອນຄວາມພະຍາຍາມຂອງຕົນ ໃນການຕໍ່ສູ້ກັບກຸ່ມຄົນເຜົ່າມົ້ງເຫຼົ່ານັ້ນຢ່າງເອີາຈິງເອີາຈັງ. ລັດຖະບານ ຍັງຄົງສືບຕໍ່ໃຫ້ "ອະໄພຍະໂທດ" ສຳລັບຜູ້ທີ່ອອກມາຍອມຈຳນົນ, ແຕ່ເນື່ອງຈາກການປະພຶດໃນອະດີດຂອງເຂົາເຈົ້າ ກຸ່ມຄົນເຜົ່າມົ້ງທີ່ອອກມາຍອມຈຳນົນ ແລະ ໄດ້ຮັບອະໄພຍະໂທດນັ້ນ ກໍ່ຍັງສືບຕໍ່ເປັນເປົ້າສົງໄສເຝົ້າລະວັງຂອງເຈົ້າໜ້າທີ່ ແລະ ໜ່ວຍງານດ້ານຄວາມໝັ້ນຄົງຢູ່. ລັດຖະບານຍັງຄົງສືບຕໍ່ປະຕິເສດປະຊາຄົມສາກົນທັງໝົດ ທີ່ຈະສະໜອງການຊ່ວຍເຫຼືອໂດຍກົງ ຕໍ່ກຸ່ມຄົນເຜົ່າມົ້ງທີ່ອອກມາຍອມຈຳນົນດັ່ງກ່າວ, ແຕ່ໄດ້ອະນຸຍາດການຊ່ວຍເຫຼືອຈຳນວນໜຶ່ງ ຈາກອົງການສະຫະປະຊາຊາດ ແລະ ຕົວແທນສາກົນຈຳນວນໜຶ່ງ ໃນຖານະທີ່ເປັນພາກສ່ວນໜຶ່ງຂອງໂຄງການຊ່ວຍເຫຼືອທີ່ໃຫຍ່ກວ່າ.

ການລະເມີດທາງສັງຄົມ, ການຈຳແນກ, ແລະ ການໃຊ້ຄວາມຮຸນແຮງ ໂດຍອີງໃສ່ລົດນິຍົມທາງເພດ ແລະ ເອກະລັກທາງເພດ

ບໍ່ມີຂໍ້ກຳນົດກົດໝາຍ ຫ້າມການຈຳແນກ ຫຼື ເລືອກປະຕິບັດ ໂດຍອີງໃສ່ລົດນິຍົມທາງເພດ ຫຼື ເອກະລັກທາງເພດ, ແລະ ໃນປີນີ້ ບໍ່ມີການລາຍງານຢ່າງເປັນທາງການ ກ່ຽວກັບການແບ່ງແຍກເນື່ອງຈາກປັດໃຈດັ່ງກ່າວ. ແຕ່ເຖິງຢ່າງໃດກໍ່ຕາມ, ປະກົດວ່າ ມົນທິນທາງສັງຄົມ ແລະ ຄວາມວິຕົກກັງວົນ ກ່ຽວກັບຜົນສະທ້ອນກັບຄືນ ເປັນເຫດໃຫ້ບຸກຄົນ ຕ້ອງຍັບຍັ້ງການລາຍງານກ່ຽວກັບເຫດການລ່ວງລະເມີດດັ່ງກ່າວ.

ບໍ່ມີສິ່ງກີດຂວາງທາງກົດໝາຍຕໍ່ກັບກົດຈະກຳການເຄື່ອນໄຫວການຈັດຕັ້ງຂອງກຸ່ມຄົນ ຍິງຮັກຍິງ (ເລສບຽນ), ຊາຍຮັກຊາຍ (ເກ), ຮັກທັງສອງເພດ (ໄບເຊັກຊົວ), ແລະ ກຸ່ມຄົນແປງເພດ (LGBT).

ໃນສັງຄົມຂອງຄົນລາວລຸ່ມ, ເຖິງແມ່ນວ່າຈະມີຄວາມອົດທົນສູງຕໍ່ການຂະຫຍາຍຕົວຢ່າງກ້ວາງຂວາງຂອງກຸ່ມຄົນ LGBT, ແຕ່ກໍ່ຍັງມີປະກົດການຈຳແນກຕໍ່ກຸ່ມຄົນເຫຼົ່ານີ້ ໃນການຈ້າງງານ ແລະ ທີ່ພັກອາໄສ, ແລະ ກໍ່ບໍ່ໄດ້ມີຄວາມພະຍາຍາມຈາກທາງພາກລັດໃນການແກ້ໄຂບັນຫາດັ່ງກ່າວ. ນັກເຄື່ອນໄຫວທ້ອງຖິ່ນອະທິບາຍວ່າ ບຸກຄົນທີ່ຢູ່ໃນກຸ່ມ LGBT ທັງໝົດ ບໍ່ມຸ້ງຫວັງທີ່ຈະຍື່ນຄຳຮ້ອງສະໝັກງານກັບລັດຖະບານ ຫຼື ໜ່ວຍງານເອກະຊົນລະດັບສູງ ເພາະເຂົ້າໃຈດີແລ້ວວ່າ ນາຍຈ້າງບໍ່ຕ້ອງການຈ້າງງານພວກເຂົາ. ລາຍງານຈຳນວນໜຶ່ງລະບຸວ່າ ກຸ່ມຍິງຮັກຍິງ ຈະເປັນກຸ່ມທີ່ຖືກສັງຄົມປະນາມ ແລະ ແບ່ງແຍກຫຼາຍກວ່າ ກຸ່ມຊາຍຮັກຊາຍ.

ບັນຫາຄວາມຮຸນແຮງ ແລະ ການແບ່ງແຍກອື່ນໆໃນສັງຄົມ

ບໍ່ມີການລະເມີດທາງສັງຄົມ ຫຼື ການແບ່ງແຍກຢ່າງເປັນທາງການ ຕໍ່ຜູ້ທີ່ຕິດເຊື້ອເອຈ໌ໄອວີ ແລະ ພະຍາດເອດສ໌, ແຕ່ປະກົດວ່າ ຍັງມີການແບ່ງແຍກທາງສັງຄົມເກີດຂຶ້ນຢູ່. ລັດຖະບານໄດ້ສືບຕໍ່ດຳເນີນການຢ່າງແຂງຂັນໃນການປຸກລະດົມສັງຄົມໃຫ້ຍອມຮັບຜູ້ຕິດເຊື້ອເອຈ໌ໄອວີ ແລະ ພະຍາດເອດສ໌, ແລະ ໄດ້ມີການໂຄສະນາປຸກລະດົມສັງຄົມ

ເພື່ອສົ່ງເສີມຄວາມເຂົ້າໃຈຕໍ່ກຸ່ມຄົນດັ່ງກ່າວ.

ພາກທີ 7. ສິດທິຂອງຜູ້ອອກແຮງງານ

ກ. ສິດເສລີພາບໃນການຈັດຕັ້ງສະມາຄົມ ແລະ ສິດໃນການຈັດຕັ້ງຄະນະກຳມະການຕໍ່ລອງ

ກົດໝາຍບໍ່ອະນຸຍາດໃຫ້ຜູ້ອອກແຮງງານຈັດຕັ້ງ ແລະ ເຂົ້າຮ່ວມສະຫະພັນແຮງງານທີ່ເປັນອິສະຫຼະ ຕາມ ໃຈຂອງເຂົາເຈົ້າ, ພວກເຂົາອາດຈະຕັ້ງສະຫະພັນ ໂດຍບໍ່ໄດ້ຮັບການອະນຸຍາດລ່ວງໜ້າໄດ້ ກໍ່ຕໍ່ເມື່ອພວກເຂົາ ດຳເນີນການ ຢູ່ໃນຂອບເຂດວຽກທີ່ໄດ້ຮັບອະນຸຍາດຖືກຕ້ອງຢ່າງເປັນທາງການຂອງສະຫະພັນກຳມະບານລາວ ເຊິ່ງຢູ່ພາຍໃຕ້ການຊີ້ນຳຂອງ ພປປລ. ນອກຈາກນັ້ນ, ກົດໝາຍບໍ່ອະນຸຍາດໃຫ້ສະຫະພັນແຮງງານ ເຄື່ອນໄຫວ ກົດຈະກຳຂອງເຂົາເຈົ້າ ໂດຍປາສະຈາກ ການແຊກແຊງຂອງລັດຖະບານ, ຫ້າມສະຫະພັນຮັບເອົາຄົນຕ່າງຊາດເປັນ ສະມາຊິກ, ຫ້າມສະມາຊິກຂອງສະຫະພັນກຳມະບານຢຸດວຽກ ຫຼື ຍົກເລີກສັນຍາແຮງງານ ໂດຍປາສະຈາກ ການໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ກ່ຽວຂ້ອງ, ແລະ ຫ້າມການຈັ້ງຕັ້ງພັນທະມິດ ຫຼື ການຊຸມນຸມເພື່ອປະທ້ວງ.

ຜູ້ອອກແຮງງານ ບໍ່ມີສິດໃນການຈັ້ງຕັ້ງຄະນະກຳມະການຕໍ່ລອງ. ກົດໝາຍກຳນົດວ່າ ການແກ້ໄຂບັນຫາຕ່າງໆ ແມ່ນໃຫ້ດຳເນີນການເຈລະຈາເພື່ອແກ້ໄຂ ໂດຍຜ່ານຄະນະກຳມະການໃນສະຖານທີ່ເຮັດວຽກ ເຊິ່ງປະກອບດ້ວຍ ນາຍຈ້າງ, ຕົວແທນຂອງສະຫະພັນແຮງງານທ້ອງຖິ່ນ, ແລະ ຕົວແທນຂອງສະມາຄົມ, ຜູ້ທີ່ມີອຳນາດໃນການຕັດສິນ ຂັ້ນສູງສຸດແມ່ນ ໃນກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ກົດໝາຍໄດ້ກຳນົດວ່າ ນາຍຈ້າງຈະບໍ່ໄລ່ລູກຈ້າງອອກ ດ້ວຍເຫດຜົນທີ່ວ່າ ພວກເຂົາເຂົ້າຮ່ວມການເຄື່ອນໄຫວກົດ ຈະກຳຂອງສະຫະພັນກຳມະບານ, ຮ່ວມຕົວກັນຄັດຄ້ານນາຍຈ້າງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ, ຫຼື ຮ່ວມມືກັບເຈົ້າໜ້າທີ່ລັດ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ແກ້ໄຂບັນຫາແຮງງານ, ແລະ ກໍ່ບໍ່ມີການລາຍງານກ່ຽວກັບປະເດັນນີ້.

ລັດຖະບານໄດ້ອອກຂໍ້ຫ້າມ ບໍ່ໃຫ້ມີການເຄື່ອນໄຫວໂຄ່ນລົ້ມທຳລາຍທາງດ້ານການເມືອງ ຫຼື ເດີນຂະບວນປະທ້ວງ ເພື່ອໂຄ່ນລົ້ມ ແລະ ນີ້ກໍ່ເປັນຜົນໃຫ້ການປະທ້ວງດ້ວຍການຮ່ວມຕົວກັນນັດຢຸດງານຂອງຜູ້ອອກແຮງງານບໍ່ສາມາດ ເກີດຂຶ້ນໄດ້, ແລະ ໃນປີນີ້ ກໍ່ບໍ່ມີລາຍງານກ່ຽວກັບການນັດຢຸດງານເກີດຂຶ້ນ.

ມີການລາຍງານວ່າ ຂໍ້ຄັດແຍ່ງດ້ານແຮງງານ ບໍ່ຄ່ອຍເກີດຂຶ້ນຫຼາຍປານໃດ, ແລະ ກະຊວງ ບໍ່ໄດ້ບັງຄັບໃຊ້ຂໍ້ກຳນົດກົດໝາຍໃນການແກ້ໄຂຂໍ້ຂັດແຍ່ງ, ໂດຍສະເພາະ ແມ່ນການແກ້ໄຂບັນຫາ ກັບໜ່ວຍງານຮ່ວມທຸລະກິດຂອງພາກເອກະຊົນ. ອີງຕາມການລາຍງານຂອງນັກເຄື່ອນໄຫວດ້ານແຮງງານ, ສະຫະພັນຈຳເປັນຕ້ອງຂໍອະນຸມັດ ຈາກລັດຖະບານ ເພື່ອເຂົ້າຢ້ຽມໂຮງງານ ແລະ ຕ້ອງສົ່ງແຈ້ງການຢ້ຽມຢາມ

ດັ່ງກ່າວລ່ວງໜ້າ, ເຊິ່ງເປັນການຫຼຸດຜ່ອນອຳນາດໃນການປົກປ້ອງຜູ້ອອກແຮງງານ ທີ່ຍື່ນຂໍ້ຮ້ອງຮຽນຕ່າງໆ. ຄະນະກຳມະການ ທຳໜ້າທີ່ເປັນຜູ້ໄກ່ເກ່ຍແກ້ໄຂບັນຫາແຮງງານ, ແຕ່ກໍ່ບໍ່ມີຂໍ້ມູນວ່າ ຄະນະກຳມະການດັ່ງກ່າວ ໄດ້ປະຕິບັດໜ້າທີ່ຕົວຈິງ ມີປະສິດທິພາບຫຼາຍຊໍ່າໃດ.

ຂ. ຫ້າມການບີບບັງຄັບເພື່ອໃຊ້ແຮງງານ

ກົດໝາຍຫ້າມທຸກຮູບແບບຂອງການບັງຄັບໃຊ້ແຮງງານ ຍົກເວັ້ນໃນເວລາທີ່ເກີດມີສົງຄາມ ຫຼື ໄພພິບັດລະດັບຊາດ. ແຕ່ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກຈຳນວນຂອງຜູ້ກວດກາ ແລະ ຊັບພະຍາກອນມີຄວາມຈຳກັດ, ລັດຖະບານບໍ່ໄດ້ບັງຄັບໃຊ້ກົດໝາຍນີ້ຢ່າງເອົາຈິງເອົາຈັງ. ແຮງງານທີ່ຖືກບັງຄັບ, ລວມມີ ການບັງຄັບໃຊ້ແຮງງານເດັກ ເຊິ່ງມີລາຍງານວ່າ ໄດ້ມີປະກົດການນີ້ເກີດຂຶ້ນໃນຂົງເຂດອຸດສະຫະກຳກະສິກຳ, ເປັນຕົ້ນແມ່ນການປູກຢາງພາລາ.

ເບິ່ງ *ບົດລາຍງານ ກ່ຽວກັບ ການຄ້າມະນຸດ* ຂອງກະຊວງການຕ່າງປະເທດສະຫະລັດອາເມຣິກາ ທີ່ເວັບໄຊ www.state.gov/j/tip.

ຄ. ການຫ້າມໃຊ້ແຮງງານເດັກ ແລະ ເກນອາຍຸຕ່ຳສຸດ ສຳລັບການຈ້າງງານ

ກົດໝາຍກຳນົດໃຫ້ເດັກນ້ອຍອາຍຸລະຫ່ວາງ 14 ຫາ 18 ປີ ເຮັດວຽກໄດ້ບໍ່ເກີນ 8 ຊົ່ວໂມງ ຕໍ່ມື້, ໃນເງື່ອນໄຂເປັນວຽກທີ່ບໍ່ອັນຕະລາຍ ແລະ ບໍ່ຫຍຸ້ງຍາກ. ໃນປີນີ້ ບໍ່ມີການລາຍງານກ່ຽວກັບເດັກນ້ອຍເຮັດວຽກໃນສະຖານທີ່ທີ່ມີສະພາບແວດລ້ອມທີ່ເປັນອັນຕະລາຍ. ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ຮັບຜິດຊອບ ການບັງຄັບໃຊ້ກົດໝາຍ ວ່າດ້ວຍແຮງງານເດັກ, ແຕ່ການບັງຄັບໃຊ້ກົດໝາຍກໍ່ຍັງບໍ່ທັນມີປະສິດທິຜົນ ເນື່ອງມາຈາກ ການຂາດແຄນຜູ້ກວດກາ ແລະ ຊັບພະຍາກອນ. ມີເດັກນ້ອຍຫຼາຍຄົນທີ່ຊ່ວຍວຽກຄອບຄົວໃນຂົງເຂດກະສິກຳ ຫຼື ໃນຮ້ານຄ້າ ແລະ ທຸລະກິດຂອງຄອບຄົວ, ແຕ່ແຮງງານເດັກໃນຂົງເຂດວິສາຫະກິດອຸດສາຫະກຳ ບໍ່ຄ່ອຍມີປານໃດ. ໄດ້ມີການອ້າງອີງວ່າ ມີການບັງຄັບໃຊ້ແຮງງານເດັກນ້ອຍຜູ້ຊາຍເກີດ ຂຶ້ນໃນຂົງເຂດວຽກງານກະສິກຳ ເຊັ່ນ: ການປູກຢາງພາລາ.

ງ. ເງື່ອນໄຂການເຮັດວຽກທີ່ຍອມຮັບໄດ້

ໃນເດືອນພະຈິກ 2011, ລັດຖະບານໄດ້ກຳນົດຄ່າຈ້າງຂັ້ນຕ່ຳສຸດຕໍ່ເດືອນ ສຳລັບລູກຈ້າງຂອງຫົວໜ່ວຍທຸລະກິດເອກະຊົນ ທີ່ 626,000 ກີບ (ປະມານ 75 ໂດລາ). ນອກຈາກນັ້ນ ລູກຈ້າງຍັງໄດ້ຮັບຄ່າອາຫານຈຳນວນ 8,000 ກີບ (1 ໂດລາ) ຕໍ່ວັນ. ນາຍົກລັດຖະມົນຕີ ກຳນົດຄ່າຈ້າງຂັ້ນຕ່ຳສຸດສຳລັບຂ້າລາດຊະການ ແລະ ພະນັກງານລັດວິສາຫະກິດ ທີ່ 500,000 ກີບ (63 ໂດລາ) ຕໍ່ເດືອນ ສຳລັບປີງົບປະມານ 2012-13. ລັດຖະບານຄາດຄະເນຂີດໝາຍບັນຖັດຖານຄວາມທຸກຍາກແຫ່ງຊາດ ໃນລາຍຮັບສະເລ່ຍ ທີ່ 192,000 ກີບ (24 ໂດລາ) ຕໍ່ຄົນ ຕໍ່ເດືອນ.

ນອກຈາກເງິນເດືອນພື້ນຖານແລ້ວ, ພະນັກງານລັດ ກໍ່ຍັງໄດ້ຮັບການສະໜອງທີ່ພັກອາໄສ ແລະ ຜົນປະໂຫຍດອື່ນໆ ຈາກລັດຖະບານນຳອີກ. ຍັງມີລູກຈ້າງລາຍວັນຈຳນວນໜຶ່ງ, ໂດຍສະເພາະ ໃນຂົງເຂດວຽກງານກໍ່ສ້າງ ໄດ້ຮັບຄ່າຈ້າງ ຕ່ຳກວ່າອັດຕາຄ່າແຮງຂັ້ນຕ່ຳສຸດທີ່ກຳນົດໄວ້.

ກົດໝາຍກຳນົດຊົ່ວໂມງເຮັດວຽກ ອາທິດໜຶ່ງບໍ່ເກີນ 48 ຊົ່ວໂມງ (36 ຊົ່ວໂມງສຳລັບຜູ້ທີ່ເຮັດວຽກຢູ່ໃນສະພາບແວດລ້ອມທີ່ເປັນອັນຕະລາຍ) ແລະ ຕ້ອງມີມື້ພັກຢ່າງໜ້ອຍໜຶ່ງວັນຕໍ່ອາທິດ. ການເຮັດວຽກລ່ວງເວລາ ແມ່ນບໍ່ໃຫ້ເກີນ 30 ຊົ່ວໂມງຕໍ່ເດືອນ, ແລະ ແຕ່ລະຄັ້ງຂອງການເຮັດວຽກລ່ວງເວລາແມ່ນບໍ່ໃຫ້ເກີນສາມຊົ່ວໂມງ. ຄ່າຈ້າງສຳລັບການເຮັດວຽກລ່ວງເວລາ ແມ່ນແຕກຕ່າງກັນ ນັບແຕ່ 150 ເຖິງ 300 ເປີເຊັນ ຂອງຄ່າຈ້າງປົກກະຕິ. ການບັງຄັບໃຊ້ກົດໝາຍການເຮັດວຽກລ່ວງເວລາ ບໍ່ຄ່ອຍມີປະສິດທິຜົນ. ອີງຕາມກົດໝາຍ, ລັດຖະບານໄດ້ກຳນົດໃຫ້ມີວັນພັກທາງການ. ຜູ້ເຮັດວຽກພາຍໃຕ້ສັນຍາແຮງງານ ທີ່ມີການກຳນົດເວລາ ຫຼື ພາຍໃນໄລຍະເກີນໜຶ່ງປີ ແລະ ຜູ້ທີ່ເຮັດວຽກຄົບຈຳນວນໜຶ່ງປີ ມີສິດໄດ້ຮັບວັນພັກປະຈຳປີໃນຈຳນວນ 15 ວັນຕໍ່ປີ. ສຳລັບຜູ້ທີ່ເຮັດວຽກໜັກ ຫຼື ໃນສະຖານທີ່ເປັນອັນຕະລາຍຕໍ່ສຸຂະພາບ, ຕາມກົດໝາຍກຳນົດໄວ້, ແມ່ນມີສິດໄດ້ຮັບ ວັນພັກຈຳນວນ 18 ວັນຕໍ່ປີ ໂດຍໄດ້ຮັບຄ່າຈ້າງເຕັມຕາມອັດຕາຄ່າຈ້າງ.

ກົດໝາຍກຳນົດເງື່ອນໄຂຄວາມປອດໄພໃນການເຮັດວຽກ ແລະ ຄ່າຕອບແທນທີ່ສູງກວ່າ ສຳລັບວຽກທີ່ອັນຕະລາຍ. ໃນກໍລະນີທີ່ຜູ້ເຮັດວຽກໄດ້ຮັບບາດເຈັບ ຫຼື ເສຍຊີວິດໃນໜ້າທີ່, ນາຍຈ້າງມີຄວາມຮັບຜິດຊອບໃນການຈ່າຍຄ່າທົດແທນໃຫ້ແກ່ຜູ້ເຮັດວຽກ ຫຼື ຄອບຄົວຂອງເຂົາເຈົ້າ. ໂດຍທົ່ວໄປ, ນາຍຈ້າງຈະເຮັດຕາມຂໍ້ກຳນົດດັ່ງກ່າວນີ້ ໃນຂົງເຂດເສດຖະກິດທາງການ ແຕ່ບໍ່ຢູ່ໃນຂົງເຂດທຸລະກິດທີ່ບໍ່ເປັນທາງການ. ກົດໝາຍຍັງໄດ້ກຳນົດຄວາມຮັບຜິດຊອບຂອງນາຍຈ້າງຄວບຄຸມຕໍ່ກັບ ລູກຈ້າງທີ່ເສຍອົງຄະໃນໜ້າທີ່, ແລະ ປັດບັນຍັດນີ້ ປະກົດວ່າ ໄດ້ມີການບັງຄັບໃຊ້ຢ່າງມີປະສິດທິຜົນ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ຮັບຜິດຊອບ ໃນການກວດກາ ສະຖານທີ່ເຮັດວຽກ, ແລະ ພະແນກກວດສອບແຮງງານຂອງກະຊວງ ຄາດຄະເນວ່າ ມີຜູ້ກວດກາປະມານ 200 ຄົນ ໃນທົ່ວປະເທດ ໃນປີ 2011, ເຊິ່ງເພີ່ມຂຶ້ນຫ້າທົບຈາກປີ 2010, ເປັນຜູ້ດຳເນີນການກວດສອບຈຳນວນ 2,672 ຄັ້ງ ໃນປີນັ້ນ. ເຈົ້າໜ້າທີ່ຈະທຳການກວດກາ ໂດຍບໍ່ມີການແຈ້ງການລ່ວງໜ້າ ໃນກໍລະນີທີ່ມີການສັງເກດເຫັນວ່າ ມີການລະເມີດມາດຕະຖານເງື່ອນໄຂຄວາມປອດໄພໃນການເຮັດວຽກ ແລະ ມອບພັນທະໃຫ້ນາຍຈ້າງ ຕ້ອງແກ້ໄຂບັນຫາການລະເມີດດັ່ງກ່າວພາຍໃນ ສາມຫາຫົກເດືອນ ບໍ່ດັ່ງນັ້ນຈະຖືກປັບໄໝ. ພະແນກກວດກາລາຍງານວ່າ ມີອຸປະຕິເຫດໃນສະຖານທີ່ເຮັດວຽກເກີດຂຶ້ນ ຈຳນວນ 17 ຄັ້ງ ໃນປີ 2011, ປຽບທຽບໃສ່ປີ 2010 ທີ່ມີເຖິງ 142 ຄັ້ງ ໂດຍມີອຸປະຕິເຫດຮ້າຍແຮງເຖິງແກ່ຊີວິດ 10 ຄັ້ງ.

ມີແຮງງານເຂົ້າເມືອງທີ່ບໍ່ມີເອກະສານອະນຸຍາດເປັນຈຳນວນຫຼາຍໃນປະເທດ, ໂດຍສະເພາະແມ່ນມາຈາກຫວຽດນາມ, ຈີນ ແລະ ພະມ້າ, ແລະ ແຮງງານເຫຼົ່ານີ້ຍັງຄົງສືບຕໍ່ຕົກຢູ່ໃນສະພາບຖືກເອົາປຽບ ຈາກນາຍຈ້າງ. ແຮງງານເຫຼົ່ານີ້ ສ່ວນໃຫຍ່ເຮັດວຽກຢູ່ໃນຂົງເຂດກໍ່ສ້າງ, ການປູກຝັງ, ບ່ອນຫຼີ້ນການພະນັນ, ແລະ ອຸດສາຫະກຳ

ດ້ານການບໍລິການ. ກົດໝາຍກຳນົດຈຳນວນເປີເຊັນ ຂອງການຈ້າງງານຄົນຕ່າງປະເທດວ່າ ບໍລິສັດເຄື່ອນໄຫວພາຍໃນປະເທດໜຶ່ງໆ ສາມາດຈ້າງ ແລະ ຕ້ອງໄດ້ຂໍອະນຸຍາດໃຫ້ແຮງງານຕ່າງດ້າວ, ແຕ່ກໍ່ບໍ່ໄດ້ກຳນົດກ່ຽວກັບການປົກປ້ອງເງື່ອນໄຂການເຮັດວຽກສະເພາະສຳລັບເຂົາເຈົ້າ. ອີງໃສ່ການສຳຫຼວດດ້ານແຮງງານໃນທຸກໆແຂວງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະເມີນວ່າ ໃນເດືອນຕຸລາ ປີ 2010 ມີແຮງງານຕ່າງດ້າວປະມານ 54,000 ຄົນ ທີ່ເຮັດວຽກຢ່າງຖືກກົດໝາຍ ແລະ ບໍ່ຖືກກົດໝາຍໃນປະເທດ, ແລະ ໃນນັ້ນມີພຽງ ສອງສ່ວນສາມ ຂອງພວກເຂົາ ມີໃບອະນຸຍາດເຮັດວຽກ.